# ຂ່າວໃບລານ

ໂຄງການປົກປັກຮັກສາໜັງສືໃບລານລາວ ການຮ່ວມມືລາວ-ເຢຍລະມັນ ປີທີ 1 ສະບັບທີ 3* ມີນາ 1994
PRESERVATION OF LAO MANUSCRIPTS PROGRAMME LAO-GERMAN COOPERATION

## ໜັງສືໃບລານ ຢູ່ ກຳແພງນະຄອນ

ພາຍຫຼັງ ໜ່ວຍສຳຫລວດ ປົກປັກຮັກສາ ເອກະສານ ໃບລານລາວ ໄດ້ເຄື່ອນໄຫວ ສຳຫຼວດ ຢູ່ຕາມຫົວເມືອງຕ່າງໆ ຫລື ຕາມວັດຕ່າງໆ ໃນແຂວງວຽງຈັນ ສຳເລັດໄປ ໃນທ້າຍເດືອນ ກັນຍາ 1993 ຜ່ານມາ ໜ່ວຍສຳຫຼວດ ກໍ່ໄດ້ຫັນເຂົ້າມາເຄື່ອນໄຫວຢູ່ໃນເຂດ ກຳແພງນະຄອນວຽງຈັນ, ຕາມແຜນການ ຂອງ ໂຄງການປົກປັກຮັກສາໜັງສືໃບລານລາວ ໄດ້ກຳນົດເອົາໄວ້ ແລະ ເພື່ອຕອບສະໜອງ ຄວາມຄອງຄອຍຂອງຊາວ ກຳແພງນະຄອນ ຊຶ່ງ ບ້ານໃດເມືອງໃດ ກໍ່ມີຄວາມ ປາຖນາ ຢາກຈະໃຫ້ ເອກະສານໃບລານຂອງຕົນ ໄດ້ຮັບການອະນຸລັກຮັກສາແບບໃໝ່ ເພື່ອໃຫ້ມູນມໍລະດົກທີ່ມີຄ່າເຫລົ່ານີ້ ຍືນຍົງໄປເຖິງຮຸ່ນຫລັງໆ ໄດ້ຄົ້ນຄວ້າຮ່ຳຮຽນ. ຢູ່ໃນກຳແພງນະຄອນ ໜ່ວຍສຳຫຼວດ ກໍ່ຄືຄະນະໂຄງການ ໄດ້ເລືອກເອົາ ເຂດນອກ ເທດສະບານ ເປັນຈຸດເລີ່ມ ເອີ້ນວ່າ "ເອົານອກເຂົ້າໃນ" ດັ່ງນັ້ນ ເມືອງ ໄຊທານີ ຈຶ່ງເປັນຈຸດເລີ່ມ ໂດຍການກຳນົດເອົາ ບາງວັດ ເຂົ້າຢູ່ໃນເປົ້າໝາຍສຳຫຼວດ ຄື ວັດທີ່ມີ ເອກະສານຫຼາຍ ເປັນວັດເກົ່າແກ່ ສຳຄັນ ພາຍໃນ ເມືອງ ດັ່ງກ່າວ.

ໃນຕອນເຊົ້າຂອງວັນທີ 13/10/1993 ໜ່ວຍສຳຫຼວດ ພ້ອມດ້ວຍນັກວິຊາການ ກໍ່ໄດ້ລົງສູ່ເຂດ ທາດກ້ຽງ ແລະ ເລີ່ມຕົ້ນການສຳຫຼວດ ຢູ່ວັດ ປະຊານິຍົມ ວາລະວາດ ບ້ານນາກຸງ, ທ່ານ ນາງ ດາຣາ ກັລຍາ ຫົວໜ້າໂຄງການ ກໍ່ໄດ້ຕິດຕາມລົງໄປນຳ ເພື່ອຈະໄດ້ກ່າວຈຸດປະສົງ ແລະ ຄວາມສຳຄັນ ຂອງ ໂຄງການ ກໍ່ຄືການສຳຫຼວດ ປົກປັກຮັກສາສູ່ຊາວບ້ານ ເພື່ອຄວາມເຂົ້າອົກເຂົ້າໃຈ. ໄປເຖິງຄັ້ງແຮກກໍ່ເຫັນ ຍາພໍ່ ມະຫາ ພ້ອມກັບເຖົ້າແກ່ແນວໂຮມບ້ານ ປະມານ 6 - 7 ຄົນ ນັ່ງລໍຖ້າ ເຫັນກຸດຕີຢ່າງຈົດຈໍ່, ແຕ່ເບິ່ງທົ່ວໄປແລ້ວ ກໍ່ປາກົດວ່າ ບັນຍາກາດ ເປັນສິ່ງຮຽບໆ ເມື່ອຫົວໜ້າໂຄງການໄດ້ຜັດປ່ຽນກັບກ່າວຈຸດປະສົງ ໃນການອະນຸລັກຮັກສາ ແລະ ຄວາມສຳຄັນ ຂອງ ໜັງສືໃບລານ ຮ່ວມກັບທີ່ປຶກສາຂອງ ໂຄງການແລ້ວ, ປາກົດວ່າ ບຸກຄົນສຳຄັນຮຸ່ນອາວຸໂສເຫຼົ່ານັ້ນ ຫັນໜ້າ ຍິ້ມເປີ້ຍໃສ່ກັນ, ສະແດງອອກເຖິງຄວາມພໍໃຈ ແລະ ຖືກກັບ ⇨

### ເຊີນອ່ານ

ສະກິຕິການສຳຫຼວດ ປີທີ1
ການຄົ້ນຄ້ວາ-ດັດໃສ້ໜັງສືໃບລານ
ຕຳລາຢາ ແພນບູຮານ
ວັດ ແລະ ບ້ານ

ຄວາມສຳນຶກ ທີ່ເຂົາເຈົ້າມີມາກ່ອນແລ້ວ, ທີດເຂືອງໜຶ່ງໃນຈຳນວນນັ້ນ ໄດ້ເວົ້າອອກມາວ່າ : "ມີຜູ້ມານຳພາເຮັດແນວນີ້ມັນກະດີແລ້ວເດ !" ຈາກນັ້ນຊາວບ້ານທັງຍິງ ທັງຊາຍ ກໍ່ຫຼັ່ງໄຫຼລົງມາວັດ ຂຶ້ນກຸດຕິຫຼັງໃຫຍ່ ເພື່ອປະສານງານ ກັບໜ່ວຍ ສຳຫຼວດ ນັ້ນກໍ່ຄື ເຮັດອະນາໄມໃບລານ ໃຫ້ສະອາດ. ຕູ້ຄຳພີໃບລານ ວັດບ້ານນາກຸງ ໂດດເດັ່ນຢູ່ເທິງຊັ້ນທີສາມ ຂອງ ກຸຕິຫຼັງໃຫຍ່ ສ້າງຂຶ້ນແບບບູຮານ, ຊັ້ນເທິງ ເປັນ ທີ່ສະໝຸດບັນຈຸໃບລານໄວ້ນານປີ, ມີຕູ້ບັນຈຸໄວ້ຢ່າງຈົບງາມ, ແຕ່ກໍ່ໜ້າວິຕົກ ເພາະໄຂຕູ້ອອກມາແລ້ວເອກະສານຊ້ຳຜັດເຈືອປົນກັບຝຸ່ນ, ສາຍສະໜອງຂາດ, ກຸດທັຣນເກືອບເຄິ່ງໜຶ່ງ. ຜູ້ເຖົ້າບາງຄົນ ເວົ້າວ່າ ຢູ່ທີ່ສະໝຸດຊັ້ນ 3 ນີ້ ບໍ່ມີໃຜກ້າຂຶ້ນມາໃກ້ຈັກເທື່ອ ! ເວລານຳເອກະສານອອກນັ້ນ ຝ່າຍອາວຸໂສ ເພດຍິງ ເວົ້າວ່າ : ບໍ່ກ້າຈັບບາຍຄຳພີໃບລານເພາະຢ້ານບາບ! ພະນັກງານ ສຳຫຼວດ ຜູ້ນຳພາການ ສຳຫລວດບາງຄົນ ກໍ່ໄດ້ກະຊັບໃສ່ຄ່ອຍໆວ່າ : ບໍ່ບາບດອກ... ແມ່ຕູ້ເອີຍ! ອັນຫນຶ່ງເຮົາປະໄວ້ແບບບໍ່ບົວ ລະບັດພັດສີ ເຮັດໃຫ້ຫນັງສືທັບ ໂນະຫມົ່ນ, ເຮົາກໍ່ຈະໄດ້ບາບຫລາຍກວ່າເຮົາຈັບບາຍ, ສະນັ້ນເຮົາຈັບບາຍ ເພື່ອເຮັດ ອະນາໄມໃຫ້ຈົບງາມ, ເຮົາກໍ່ຈະເປັນຜູ້ໄດ້ອານິສົງຈັ່ງໃດລະ ແມ່ຕູ້, ອີກຢ່າງໜຶ່ງ ເມື່ອເວລາພວກເຮົາສຳເລັດແລ້ວພວກເຮົາກໍ່ຍັງຈະໄດ້ສະຫຼຸບຄາລະວະທຳ, ແລ້ວກໍ່ເອົາຂຶ້ນມາ ບັນຈຸໄວ້ບ່ອນເກົ່າ ແບບຈົບງາມ ນຳອີກ...



ທັງວັນ ແລະ ຄືນ ນັບແຕ່ມື້ເລີ່ມຕົ້ນ ຊາວບ້ານນາກຸງທຸກເພດໄວ ລົງມານັ່ງເຕັມກຸດຕິຫຼັງໃຫຍ່ ຈົນເຖິງມື້ສຸດທ້າຍ ເພື່ອອະນາໄມ ຄຳພີໃບລານ, ເປັນຕາໜ້າສັນລະເສີນອີ່ຫຼີ່, ບ້ານນີ້ ພິເສດແທ້ໆ .

✳ ເຄື່ອນໄປ ວັດວິສຸດທາຣາມບ້ານທົ່ງມັ່ງ, ເຊົ້າມື້ນີ້ ໜ່ວຍສຳຫຼວດດີໃຈຫຼຸ່ມ ເພາະໄດ້ເຫັນຊາວບ້ານນັ່ງເຕັມ ອາຮາມຫລັງໃຫຍ່, ມີອຳນາດການປົກຄອງຄົບຊຸດ, ເປັນມື້ລວມບ້ານຂອງເພິ່ນ. ໄດ້ໂອກາດດີເພາະນາຍບ້ານ ເຊີນພະນັກງານສຳຫຼວດຂຶ້ນກ່າວ ຈຸດປະສົງສູ່ຊາວບ້ານຟັງ, ເຮັດໃຫ້ເຂົາເຈົ້າ ເຂົ້າໃຈ ໃນອັ້ນ ພື້ນຖານ.

ໜ່ວຍສຳຫຼວດໄດ້ຮັບການ ຮ່ວມໄມ້ຮ່ວມມື ຈາກຄະນະປົກຄອງບ້ານ ພ້ອມກັບຫົວໜ້າເຂດເປັນ ຢ່າງ ດີ, ເພີ່ນໃຫ້ຄວາມສະດວກທຸກດ້ານ ແລະ ເປັນກັນເອງ ທີ່ສຸດ, ເຖິງວ່າຈະມີຄວາມຫຍຸ້ງຍາກນຳການ ເກັບກ່ຽວແຕ່ເຂົາເຈົ້າກໍ່ຜັດປ່ຽນກັນມາຊ່ວຍ ຢ່າງເອົາການເອົາງານ ຄືນສຸດທ້າຍ ຄຶກຄື້ນໄປດ້ວຍ ການຄົບງັນ, ຊົມເຊີຍ ນຳເຖົ້າແກ່ອາວຸໂສທັງຊາຍ ແລະ ຍິງ ຈັດໃຫ້ມີການ ຂັບລຳພະຍາຕໍ່ແຍກັນ, ມ່ວນອີ່ຫລີ. ແຕ່ຢູ່ທີ່ນີ້ ບໍ່ມີຕູ້ບັນຈຸເອກະສານໃບລານ ໜ່ວຍສຳຫຼວດ ກໍ່ໄດ້ສະໜອງໃຫ້ໜຶ່ງໜ່ວຍ. ເອກະສານຢູ່ທີ່ນີ້ແຕ່ກ່ອນໆ ແມ່ນມີ ການປົກປັກຮັກສາດີ ເພາະເຫັນຜ້າ ຄຳພີ ຫໍ່ຫຸ້ມສະຫຼັກ ລວດລາຍຈົບງາມ, ແຕ່ຂາດສ້ອຍ, ໂນະໝົ່ນ ເນື່ອງຈາກຂາດການດູແລ ໃນໄລຍະຕໍ່ມາ, ປະຈຸບັນວັດນີ້ ມີຍາພໍ່ເຖົ້າ ອົງດຽວ ເປັນຜູ້ຢູ່ວັດ, ກໍ່ຫນ້າເຫັນໃຈ. ການໄປສຳ

➡

ຫຼວດ ເທື່ອນີ້ ເຮັດໃຫ້ອຳນາດການປົກຄອງ ບ້ານທົ່ງມັ່ງ ຕັ້ງບັນຫາວ່າ ຕໍ່ໄປເຂົາເຈົ້າ ຈະຕັ້ງຜູ້ຮັບຜິດຊອບ ດ້ານ ທັມມະການຂື້ນ ເພື່ອດູແລ ດ້ານ ວັດທະນະທຳ ໃນບ້ານ ຂອງເຂົາເຈົ້າ. ທິດໂປ້ ນາຍບ້ານຄົນໃຫມ່ ສະແດງ ຄວາມດີໃຈເປັນພິເສດ, ເພາະຂື້ນຮັບຕຳແໜ່ງ ໃນມື້ນັ້ນ ກໍ່ໄດ້ຮັບກຽດ ຕ້ອນຮັບ ແຂກໃບລານ ເປັນຄັ້ງແຮກ, ຂອບໃຈນຳເນີ.

✳ ຈາກທົ່ງມັ່ງ ກໍ່ເຄື່ອນຂື້ນມາ ຕາມເສັ້ນທາງ ເລກ 10 ໄປສູ່ວັດສີເທບ ທຳມະຄຸນ (ວັດກາງ) ທາດກ້ຽງ ຫ່າງຈາກທົ່ງມັ່ງປະມານ 6 ຫຼັກ. ບ້ານນີ້ ເປັນໃຈກາງຂອງເຂດ ຫນ່ວຍສຳຫຼວດ ໄດ້ເລືອກເອົາ ວັດກາງ ເພາະເປັນວັດເກົ່າ ແລະ ສຳຄັນ. ຍາພໍ່ ກ່ອນ ເຈົ້າອາວາດ ວັດ ເອົາໃຈໃສ່ ເປັນພິເສດ ເພາະເພິ່ນເຂົ້າໃຈດີ, ເພິ່ນເອງໄດ້ໄປຮ່ວມງານ ສະຫຼຸບຄາລະວະ ຢູ່ບ້ານ ທົ່ງມັ່ງມາແລ້ວ, ເພິ່ນຈຶ່ງນຳເອົາ ຈຸດປະສົງຂອງ ການ ສຳຫຼວດມາເຜີຍແຜ່ ໃຫ້ຊາວບ້ານ ທາດກ້ຽງ ເຂົ້າໃຈນຳ. ຫນ່ວຍສຳຫລວດເຮັດວຽກ ຢ່າງເຄັ່ງຮ້ອນ ເພາະເວລານີ້ ຊາວບ້ານກຳລັງຊຸ້ງຕົວ ຢູ່ກັບອາຍອຸ່ນ ຂອງບຸນຊ່ວງເຮືອ ຈະມາເຖິງຢ່າງ ຈົດຈໍ່.

ຍ້ອນຄວາມຫ່ວງໃຍ ຊາວບ້ານ ໄດ້ແຕ່ງຕັ້ງກັບລົງມານອນເຝົ້າໜັງສືໃບລານ ຢູ່ໃນອາຮາມຄືນລະ 2 ຄົນ, ເພາະຫນ່ວຍສຳຫລວດບໍ່ໄດ້ໄປປະຈຳທີ່ ຄືບ້ານອື່ນໆ ເນື່ອງຈາກ ບ້ານທາດກ້ຽງ ຍັບມໍ່ເຂົ້າມາສູ່ເທດສະບານກຳແພງ. ວຽກທີ່ນີ້ສຳເລັດໄປ ດ້ວຍດີ ຈາກແຮງໃຈ ຊາວບ້ານຄອຍໃຫ້ການປະສານ ແລະ ໃຫ້ຄວາມສະດວກ.

✳ ຍັບຂື້ນມາຕາມສາຍທາງເລກ 10, ໜ່ວຍສຳຫຼວດໄດ້ຂ້າມນ້ຳງື່ມ ມາທຳການສຳຫລວດ ຢູ່ວັດທ່າງ່ອນ ( ວັດສີບຸນເຮືອງກາງ ) ໄດ້ຮັບຄວາມຫມັ້ນໃຈຈາກ ຍາທ່ານ ຄ່ອຍ ເຈົ້າອາວາດວັດ ຜູ້ມີປາ ລະມີສູງ ຕໍ່ອອກຕົນ ຍາດໂຍມ ທັງເປັນຄະນະ ພ.ສ.ລ. ເມືອງ ໄຊທານີ ອີກດ້ວຍ. ທ່າງ່ອນ ແມ່ນເທດສະບານ ເມືອງ ໄຊທານີ ກໍ່ວ່າໄດ້ ຊາວບ້ານພາກັນທຳທຸລະກິດ ແລະ ເປັນອ້າລັດຖະການສ່ວນຫຼາຍ, ຈຶ່ງເປັນການຍາກ ທີ່ ຈະມີຄົນລົງມາຊ່ວຍໃນການເຮັດອະນາໄມ ໃບລານ, ຍາທ່ານ ຄ່ອຍ ຮ່ວມກັບໜ່ວຍສຳຫຼວດ ໄດ້ເຊີນເອົາ ນັກຮຽນ ມັດທະຍົມ ຈຳນວນ 50 ຄົນ ລະດົມມາຊ່ອຍ ອະນາໄມໃບລານ, ແຕ່ເຂົາເຈົ້າຕື່ນຕົວ ມາຈົນເກີນ ຄາດຫມາຍ 200 ຄົນ ໝ້າຊົມເຊີຍ ເຕັມທີແຕ່ພະນັກງານ ສຳຫຼວດ ແນະນຳວິທີວິທະຍາ ຈົນບໍ່ໄຫວ ເຮັດ ອະນາໄມໃບລານພຽງແຕ່ 30 ນາທີ ກໍ່ສຳເລັດ ເຖິງ ຄຸນນະພາບບໍ່ສູງ ແຕ່ກໍ່ສຳເລັດໄວ ຢູ່ທີ່ນີ້ ກໍ່ເປັນການ ສ້າງຄວາມສຳນຶກ ໃຫ້ແກ່ຮຸ່ນໝຸ່ມນ້ອຍ ມີໂອກາດ ໄດ້ຮູ້ ໄດ້ເຫັນ ແລະ ຮູ້ຄວາມສຳຄັນຂອງ ລຳຜີໃບລານ ໃນ ອະນາຄົດຕໍ່ໆໄປ ເຕັມທີແຕ່ເອກະສານ ທີ່ຈົກອອກມາ ຈາກກະຕ່າ ແຕກມັດແຕກຜູກ ຈົນເກືອບທຸກຜູກ. ຢ່າງ ໃດກໍ່ດີ ປະຈຸບັນ ໄດ້ຮັກສາ ເປັນ ຢ່າງດີ ແລ້ວ.



☞

✳ ບ້ານທົ່ວຊຽງ ເປັນບ້ານໃຫຍ່ເກົ່າແກ່ ມີປະຫວັດສາດຍາວໄກ, ເຂົາເຈົ້າມີຄວາມເອກອ້າງ ແລະ ທະນົງໃຈຢູ່ກັບ ຊື່ທີ່ມາຂອງບ້ານທົ່ງຊຽງວ່າ : " ທົ່ວຂອງທ້າວຊຽງງາມ " ມີປະຫວັດພົວພັນ ຢູ່ກັບບ້ານໄຊ ດອນຫນູນ ແລະ ໂພນງາມ ໂພນໂຮງ. ບ້ານນີ້ມີນັກປາດອາຈານຫຼວງຫຼາຍ, ນາຍບ້ານ, ຮອງນາຍບ້ານ ຮ່ວມກັບລູກບ້ານ ບົ່ງລໍຮັບເຕັມອາຣາມ. ໜ່ວຍງານສຳຫຼວດ ຮ່ວມກັບຫົວຫນ້າໂຄງການ ດີໃຈຫລາຍ ທີ່ຊາວບ້ານ ໃຫ້ຄວາມສົນໃຈ ກັບວຽກງານ ການສຳຫຼວດ ແລະ ປົກປັກຮັກສາໜັງສືໃບລານ.

✳ ອອກຈາກບ້ານທົ່ວຊຽງ ພວກເຮົາໄປ ທີ່ບ້ານສາລາຄຳ, ຢູ່ທີ່ນີ້ອຸ່ນໃຈນຳແນວໂຮມ ແລະ ອັດທະນະທຳເມືອງ ໄດ້ຊີ້ແຈງໂອ້ລົມກັບຊາວບ້ານ ຈົນເຂົ້າໃຈລະອຽດ. ນີ້ທີ່ສານຂອງການ ສຳຫຼວດເຈາະກັບງານ ບຸນກະຖິນບ້ານ, ອັນຕົ້ນຄິດວ່າ ຈະເປັນການສັບສົນ, ແຕ່ມັນກໍ່ກາຍເປັນງານບຸນທັງສອງດ້ານຮ່ວມກັນເລີຍ. ການປະຕິບັດຫນ້າທີ່ແຕ່ລະມື້ ກໍ່ມີ ນັກປະຕິພານດ້ານ



ວັນນະຄະດີ ຊື່ ຈານທ່ຽງ ເປັນຜູ້ຈ່າຍກອນ ສູ່ທຸກຄົນຟັງ ເຮັດໃຫ້ມີບັນຍາກາດດີຫລາຍ. ມີແມ່ຕູ້ ( ແມ່ນາງຄຳແສນ ) ເຈົ້າຖິ່ນສາລາຄຳ ໂດຍກຳເນີດ ໄດ້ເຫຼົ່າປະຫວັດ ຄວາມເປັນມາ ຂອງບ້ານສາລາຄຳ ລະອຽດສົມຄວນ, ເຮັດໃຫ້ຫລາຍຄົນໄດ້ຄວາມຮູ້ນຳ, ຂອບໃຈຫລາຍໆ.

ຊາວບ້ານສາລາຄຳ ໄດ້ຮຽກຮ້ອງ ໃຫ້ສຳຫຼວດໄປທັງ 3 ວັດ ເພາະເປັນວັດຕົກຢູ່ໃນ ບ້ານດຽວກັນ ດັ່ງນັ້ນ ການສຳຫລວດຈຶ່ງຈັດເອົາວັດໃຫຍ່ ວັດດຽວເປັນຈຸດຍືນ, ຊຶ່ງວັດອື່ນໄດ້ເອົາເອກະສານມາ ສຳຫຼວດຢູ່ທີ່ນີ້. ການສຳຫລວດໃຊ້ເວລາຢູ່ 5 ວັນງານ ສຳເລັດໃນ 3 ວັດ ຄື:ດົງເລົ່າ, ຊຳປາກແຮດ ແລະ ສາລາຄຳ.

✳ ມາໃນວັນທີ 17/11/1993 ໜ່ວຍສຳຫຼວດກັບຄືນໄປສືບຕໍ່ເຄື່ອນໄຫວ ຢູ່ເມືອງໄຊທານີ ອີກ ບ້ານສ້າງທົ່ວບໍ່ ຫ່າງຈາກບ້ານທົ່ວຊຽງ ປະມານ 3 ກິໂລແມັດ, ເປັນບ້ານນ້ອຍໆແຕ່ຊາວບ້ານ ມີແຕ່ຜູ້ໃຈໃຫຍ່ໆ ມີຄວາມສາມັກຄີເປັນຫນຶ່ງເລີຍ, ພໍ່ຕູ້ສາລະວັດຜູ້ໃຈດີ, ນາຍບ້ານຜູ້ຫ້າວຫັນ ແລະ ຫົວຫນ້າ ສະມາຄົມຍິງ ຜູ້ມັກມ່ວນ ໃຫ້ຄວາມຮ່ວມມືຢ່າງເຕັມປ່ຽມ ທັງ 2 ວັນເຕັມໆ, ນາຍຄູປະຈຳບ້ານ ຮ່ວມກັບ ຫົວຫນ້າສະມາຄົມຍິງ ລະດົມນັກຮຽນ ມາແຫ່ໃບລານ ຟ້ອນແອ່ນໃສ່ຈັງຫວະສຽງກອງ ຢ່າງເບີກບານ ເພື່ອກ້າວໄປສູ່ພິທີ ສະຫຼຸບຄາລະວະ ເພີ່ນເສຍໃຈ ທີ່ເອກະສານວັດບ້ານເພີ່ນມີຫນ້ອຍ, ເພາະເຮັດໃຫ້ສຳຫຼວດ ແລ້ວໄວໂພດ. ນາຍບ້ານເວົ້າວ່າ ບ້ານພວກເຮົາ ເປັນບ້ານນ້ອຍໆ ແຕ່ພວກສະຫາຍກໍ່ຍັງມານຳພາ ເຮັດ ດີໃຈນຳອີຫລີ ທີ່ບໍ່ຕີບໍ່ຮີບ້ານພວກເຮົາ.

✳ ຕອນບ່າຍວັນທີ 19/11/93 ເຄື່ອນຍ້າຍໄປ ວັດແສນຊຸມ ບ້ານໃຫ້ລ້ອມ ແຍກຈາກທາງເລກ 13 ☛

ໃຕ້ ເຂົ້າໄປປະມານ 2 ຫລັກກິໂລແມັດ ທາງແວ່ຢູ່ຫມ່ງ ກັບທາງແຍກໄປກະເສດນາບົງ. ບ້ານນີ້ ເປັນບ້ານ ທີ່ ອຸດົມສົມບູນ ໄປດ້ວຍເຂົ້າປາອາຫານແຫ່ງຫນຶ່ງ ໃນ ເຂດເມືອງໄຊທານີ, ເຈົ້າອາວາດວັດ ເປັນຄະນະ ພ. ສ.ລ.ເມືອງ ໄດ້ກ່າວໃຫ້ຄວາມສຳຄັນ ແກ່ວຽກງານ ນີ້ ເປັນຢ່າງດີ ທັງເປັນຜູ້ມີອິດທິພົນ ຕໍ່ຊາວບ້ານ ເພິ່ນຍັງ ເປັນພະໜຸ່ມ ແຕ່ເປັນຜູ້ມີອາຍຸພັນສາ, ຈົວເນນ ຖືເປັນ ຮົ່ມໂພໄຊ ທີ່ສຳຄັນໃນຕົວຂອງເພິ່ນ.ຊາວບ້ານ ແລະ ພະເນນ ໃນວັດປຸ້ມລຸມກັນເຮັດອະນາໄມໃບລານ ຢ່າງ ຈົດຈໍ່ ແລະ ສຳເລັດພຽງແຕ່ສອງຄາບ. ທ່ານເປ ນາຍ ບ້ານຜູ້ມີໂວຫານ ແລະ ທ້າວທັນ ຢູ່ຄຽງຂ້າງໜ່ວຍ ສຳ ຫຼວດຕະຫຼອດຍາມ ພາເຂົ້າສາມັກຄີ ແຕ່ລະທ່ຽງວັນ ອຸດົມສົມບູນ, ຈາກສີມືຂອງ ທົວໜ້າສະມາຄົມ ຍິງ ນາງ ທອງດຳ. ແລະ ນ.ບຸນມີ ບໍລິການຄົວກິນ, ອາຫານພື້ນ ເມືອງ ທີ່ມີລົດຊາດຄື : ສົ້ມປານ້ອຍ, ຕົ້ມປາຄໍ່ ໃຫຍ່,ປາແດກເຄື່ອງ ແລະ ປີ້ງປາດຸກ ເດືອນ 11.

ເອກະສານໃບລານ ບໍ່ຄ່ອຍຊຳລຸດຫຼາຍ ເພາະ ເພິ່ນມັກເອົາລົງມາເທດ ເປັນປະຈຳ ໃນຍາມບຸນ ເຂົ້າ ພັນສາ ແລະ ວັດ ນີ້ກໍ່ເປັນບ່ອນທີ່ບໍ່ຄ່ອຍ ຂາດຄູບາອາ ຈານ ຊາວບ້ານມີສັດທາເຫຼື້ອມໃສໃນວັດວາ ສາສນາດີ ບ້ານໃຜ້ລ້ອມ ຍັງເປັນ ບ້ານທີ່ມັກມ່ວນຊື່ນ ຕາມຮີດ ຄອງປະເພນີ ເຊັ່ນ ມີ ຫມໍຂັບ, ຫມໍລຳ ແລະ ຫມໍແຄນ ວ່າແຕ່ມີ ງານປະເພນີ ຕ່າງໆ ໃນບ້ານ ເພິ່ນກໍພາກັນ ມ່ວນ ກັບເຊຍດ້ວຍ ຫມໍແຄນ ແລະ ຂັບລຳ. ຢູ່ທີ່ນີ້ ໄດ້ ດຳເນີນຢູ່ສາມວັນງານ ກໍ່ສຳເລັດໄປດ້ວຍດີ.

✳ ລ່ອງລົງຕາມທາງເລກ 13 ໃຕ້ ເຂົ້າສູ່ ບ້ານຜ້າວ, ໄກຈາກຂົວຂ້າມງື່ມ ປະມານ 6 ກິໂລ ແມັດ, ບ້ານນີ້ຕັ້ງຢູ່ສອງແຄມທາງ, ເບື້ອງໜຶ່ງ ຕິດກັບ ແຄມຝັ່ງນ້ຳງື່ມ ຕອນໃຕ້.

ຢູ່ບ້ານນີ້ ຄະນະ ໂຄງການ ກໍ່ຄືໜ່ວຍສຳຫຼວດ ໄດ້ ກະກຽມມາກ່ອນ ແລ້ວເປັນເວລາ 2 ວັນ ຈຶ່ງໄດ້ລົງໄປ, ເພາະຈະໄດ້ຈັດເປັນບ່ອນໄປທັດສະນະ ໃຫ້ແກ່ ສະມາ ຄົມ ແມ່ຍິງນາງຊາດ ໄປເບິ່ງການສຳຫຼວດ ເອກະສານ ໃບລານ ແລະ ຊົມສະຖານທີ່ ວັດທະນະທຳ ຢູ່ທີ່ນີ້ ໜ່ວຍ ສຳຫຼວດທ່ວງໃຍ ນຳຕູ້ຄຳພີ ເກົ່າແກ່(ຕູ້ບູຮານ) ທີ່ ຖືກ ປ່ອຍປະລະເລີຍ, ບາງໜ່ວຍ ຟົນຮົ່ວໃສ່ ຈົນເຮັດໃຫ້ ໃບ ລານຢູ່ເບື້ອງໃນເນົ່າເປື່ອຍ. ແລະ ຕູ້ຢູ່ໃນສະພາບ ຊຸດ ໂຊມ ແຕ່ມີສີສັນ ລວດລາຍຈົບງາມ ສ່ອງແສງ ໃຫ້ເຫັນ ສິລະປະວັດ ທະນະທຳ ຢ່າງເດັ່ນຊັດ. ໜ່ວຍສຳຫຼວດ ຮ່ວມກັບຊາວບ້ານ ພາກັນ ບົວລະບັດຜັດສີ ເປັນອັນຈົບ ງາມ ຂື້ນມາແລ້ວນຳຂື້ນໄປຕັ້ງວາງສະແດງໄວ້ ເທິງ ຫໍແຈກ.ຊາວບ້ານຮູ້ສຶກ ທະນົງໃຈ ເພາະບ້ານຂອງຕົນມີ ວັດຖຸບູຮານຫລາຍ, ພ້ອມນັ້ນ ກໍ່ມີເອກະສານ ໃບລານ ທີ່ໄດ້ປົກປັກຮັກສາ ໄວ້ເປັນຢ່າງດີ. ບ້ານຜ້າວ ມີຈຸດ ພິເສດ ໂດດເດັ່ນກວ່າຫລາຍບ້ານ ໃນເຂດເມືອງ ໄຊ ທານີ, ຊາວບ້ານ ຍັງຮັກສາຮີດຄອງປະເພນີໄດ້ດີ. ພໍ່ຕູ້ ດົມ ສາລະວັດທັງເປັນແນວ ໂຮມບ້ານເວົ້າວ່າ : ຜັດແຕ່ ເກີດມາ ຈົນເຖົ້າບໍ່ເຄີຍເຫັນໃຜ ພາເອົາໃຈໃສ່ ຄຳພີ ໃບ ລານ ຈັກເທື່ອ, ສະນັ້ນ ໂອກາດນີ້ຈະເຮັດທຸກສິ່ງ ທຸກ



ຢ່າງ ຮ່ວມມືຢ່າງສຸດໃຈ. ມື້ໆ ຈະສຳເລັດ ຢູ່ວັດ ບ້ານຜ້າວໃຕ້ ໜ່ວຍສຳຫຼວດ ກໍ່ເລີ່ມແບ່ງພະນັກງານ ໄປນຳພາ ຊາວບ້ານຜ້າວເໜືອ ເຮັດອະນາໄມ ໃບລານ ລຳຖ້າ, ສະນັ້ນ ວຽກງານສຳຫຼວດທັງສອງວັດ ກໍສຳເລັດ ໄລ່ເລ່ຍ ກັນ. ຈັດພິທີສະຫຼຸບ ຄາລະວະ ຢູ່ວັດບ້ານຜ້າວໃຕ້. ໜ້າອັດສະຈັນ ນຳບ້ານຜ້າວ ເພາະເພິ່ນ ມີນັກເປົ່າຂຸ່ຍ ຍິງ 1 ຄົນ ໄວຊະລາແລ້ວ ແຕ່ການເປົ່າຂຸ່ຍສະຫຼັບກັບສຽງຂັບງື່ມ ທັງໃຫ້ ຄວາມ ບັນເທີງ ຢູ່ບໍ່ ໜ້ອຍ ແລະເພີ່ມ ສີສັນ ໃຫ້ງານສຳຫຼວດ ມີ ບັນຍາກາດ ແບບຫາໄດ້ຍາກທີ່ສຸດ. ດີໃຈນຳ ທີ່ຊາວບ້ານຈະພາກັນ ປະຕິສັງຂອນ ຫໍໄຕ ແລ້ວຈະນຳເອົາຕູ້ຄຳພີເກົ່າ ພ້ອມກັບເອກະສານໃບລານຮື້ນບັບຈຸໄວ້ທີ່ນັ້ນ.



✳ ຫຍັບຂຶ້ນມາ ຕາມທາງເລກທີ 13 ບໍ່ພໍເທົ່າໃດ ກິໂລແມັດ ກໍ່ແມ່ນບ້ານນາຊອນເປັນບ້ານເກົ່າແກ່ ມີ ປະຫວັດສາດຍາວໄກ, ເປັນບ້ານໃຫຍ່ທັງເປັນ ໃຈກາງໃຫ້ແກ່ ເຂດນີ້ອີກດ້ວຍ.

ໜ່ວຍສຳຫລວດ ໄດ້ຮັບຄວາມສະດວກສະບາຍເນື່ອງຈາກເປັນ ບ້ານຂອງຫົວໜ້າເຂດເມືອງ ໄຊທານີເອງ. ຫົວໜ້າເຂດ ພ້ອມກັບຄະນະປົກຄອງບ້ານ ໃຫ້ຄວາມສະດວກ ແລະ ຮ່ວມໄມ້ ຮ່ວມມືເປັນຢ່າງດີ.

ເອກະສານໃບລານ ຢູ່ທີ່ນີ້ ມີຢ່າງຫຼວງຫຼາຍ, ຫຼາຍກວ່າເຂດອື່ນໆ ໃນກຳແພງນະຄອນວຽງຈັນ ສ່ວນໜຶ່ງຍັງຢູ່ໃນສະພາບດີເປັນຜູກເປັນມັດຈົບງາມ, ເພາະກ່ອນນີ້ມີ ນັກວິຊາການ ລົງມານຳພາປົກປັກຮັກສາ ໄປແລ້ວຄັ້ງໜຶ່ງ, ແຕ່ເອກະສານອີກສ່ວນໜຶ່ງ ເປັນກອງໃຫຍ່ ຍັງສັບປົນກັນ ມີທັງຜູກກຸດທຽນ ໂມກພົ່ນ, ແຕ່ການເຮັດອະນາໄມ ກໍ່ບໍ່ມີຫຍັງອາດຫວັ່ນ ເພາະຊາວບ້ານທຸກໆ ຄົນໃຫ້ ຄວາມພຽບພ້ອມ ເປັນຢ່າງດີ. ວັດນີ້ແຕ່ກ່ອນເຄີຍມີຄູບາໃຫຍ່ ເຈົ້າວັດ ເປັນຜູ້ມີປາລະມີ ສູງສົ່ງທັງເປັນນັກຂຽນຈານທີ່ລືຊື່(ຍາທ່ານບຸ), ຍ້ອນແນວນັ້ນ ເອກະສານ ໃບ ລານ ຢູ່ທີ່ນີ້ ຈຶ່ງມີຢ່າງ ມາກມາຍ.

ເມື່ອການສຳຫຼວດ ດຳເນີນໄປເຖິງ 2 ວັນ ຊາວບ້ານ ກໍນຳ ເອົາຕູ້ ໜັງສື ລົງມາ ອີກ 2 ຕູ້, ແຕ່ ກໍ່ບໍ່ທຳໃຫ້ລຳຄານໃຈ ເພາະເອກະສານຍັງເປັນຜູກເປັນມັດຢ່າງຈົບງາມ, ການສຳຫລວດກໍ່ໄດ້ຮັບຄວາມສະດວກສະບາຍ. ມື້ສຸດທ້າຍພິທີສະຫຼຸບຄາລະວະເຕັມໄປດ້ວຍຄວາມຄຶກຄື້ນ ເອົ້າຮ່ວມ ທຸກເພດໄວ ຕະຫຼອດ ຮອດຄູອາຈານ ແລະ ນັກຮຽນ.

✳ ໜ່ວຍສຳຫຼວດ ໄດ້ເຄື່ອນຂຶ້ນມານໍ່ກັບເທດສະບານກຳແພງ ນະຄອນຄື ວັດບ້ານໄຊ ປະຕິບັດງານ 6 ວັນເຕັມ ສຳເລັດຢ່າງໜ້າເພິ່ງພໍໃຈ ເພາະຊາວບ້ານ ປຸ້ມລຸມ ຊ່ວຍວຽກສຳ ຫຼວດຢ່າງເອົາການ ເອົາງານຫຼາຍຄົນ ເວົ້າວ່າ ຫາຍຫ່ວງສຳລັບບ້ານນີ້, ເພາະເປັນບ້ານຢູ່ ປະຈຳຂອງ ທ່ານອ່ອນຫລ້າ ພະນັກງານວັດທະນະທຳເມືອງ ທີ່ລົງຕິດຕາມ ກັບໜ່ວຍ ສຳຫຼວດ ໄປທຸກໆບ້ານ ນັ້ນເອງ ສະນັ້ນວຽກງານ ສຳຫຼວດຈຶ່ງສຳເລັດໄປດ້ວຍຄວາມເພິ່ງພໍໃຈ ຈາກຊາວບ້ານ ແລະ ເຖົ້າແກ່ ແນວໂຮມ ທຸກທົ່ວໜ້າ.

✳ ອອກຈາກເຂດ ເມືອງໄຊທານີ, ໜ່ວຍສຳຫຼວດ ກໍລົງສູ່ເມືອງນາຊາຍທອງ ຮ່ວມກັບ ວັດທະນະທຳ ແລະ ແນວໂຮມເມືອງ ນາຊາຍທອງ. ບັ້ນເລີ່ມຕົ້ນ ໄດ້ເປີດສາກຢູ່ເຂດນາອ່າ ໂດຍການເຂົ້າຮ່ວມ ຂອງ ແນວລາວສ້າງ ຊາດ,ພ.ສ.ລ. ເມືອງ ນາຊາຍທອງ. ພ້ອມທັງຫົວໜ້າເຂດ ນ່າອ່າ ແລະ ເຖົ້າແກ່ອາວຸໂສ 3 ບ້ານ ເຂົ້າຮ່ວມຄື: ບ້ານໂພນມ່ວງ, ຮ່ອງ ງົວ ແລະ ນາອ່າ.

ຢູ່ເຂດນາອ່ານີ້ ໜ່ວຍສຳຫຼວດ ໄດ້ປະຕິບັດງານໃນ 4 ວັດ ແບບໄລ່ເລ່ຍກັນ ຄື ວັດບ້ານນາອ່າ, ວັດໂພນມ່ວງ, ວັດຮ່ອງງົວ ແລະ ວັດພະບາດໂພນລ້ອງ, ຍາທ່ານໃຫຍ່ ເຈົ້າວັດ ນາອ່າ ແລະ ຍາທ່ານໃຫຍ່ເຈົ້າວັດ ໂພນມ່ວງ ເປັນຜູ້ມີບົດບາດ ສຳຄັນອີ່ຫຼີ່ໃນການຊຸກຍູ້ ອອກຕົນຍາດໂຍມ ເຂົ້າຮ່ວມເຮັດອະນາໄມໃບລານ, ສຳຫຼວດຍັງໄດ້ຮັບການເອົາໃຈໃສ່ ຮ່ວມ ປະສານງານ ຈາກ ອາຈານສຸລົດ ຄະນະແນວໂຮມ ເມືອງນາຊາຍທອງ ທັງເປັນຜູ້ຮັບຜິດຊອບ ຢູ່ເຂດນາອ່າ ສະເພາະເພິ່ນເວົ້າວ່າ ຢາກຈະໃຫ້ໜ່ວຍສຳຫລວດ ໄປ ສຳຫຼວດໃຫ້ໄດ້ຫຼາຍໆບ້ານທີ່ສຸດໃນເຂດຂອງທ່ານ, ແຕ່ກໍ່ໝ້າເຫັນໃຈ ເພາະນອກຈາກສີ່ວັດນັ້ນແລ້ວ, ບ້ານອື່ນໆ ຂາດເອກະສານໃບລານ, ໃນມື້ສະຫຼຸບ ຄາລະວະ ໃນເຂດນີ້ເພີ່ນພາກັນຈັດພິທີຢູ່ວັດນາອ່າ ຈຸດດຽວ ເພາະເປັນວັດສຳຄັນ ທັງເປັນໃຈກາງ ໃຫ້ແກ່ເຂດນີ້. ມີພະນັກງານທີ່ສຳຄັນຈາກເມືອງ ນາຊາຍ ທອງ ເຂົ້າຮ່ວມ, ນອກນີ້ກໍ່ມີຮອງປະທານແນວລາວ ສ້າງຊາດ ກຳແພງນະຄອນເຂົ້າຮ່ວມເປັນກຽດ, ທ່ານຍັງໄດ້ຊີ້ນຳໃຫ້ຊາວເຂດນາອ່າ ອະນຸລັກຮັກສາ ເອກະສານໄວ້ໃຫ້ພົ້ນຄົງຕະຫຼອດໄປ. ໃນ 3 ບ້ານ ແລະ 4 ວັດ ເຂດນາອ່າໃຊ້ເວລາຢູ່ 11 ວັນ ຈິ່ງສຳເລັດ.



✳ ທຍັບລົງມາຕາມ ເສັ້ນທາງເລກ 13 ເໜືອ ເຂົ້າສູ່ເຂດ ຮີ ໄລ,ໜ່ວຍສຳຫຼວດ ໄດ້ເຄື່ອນໄຫວ ຢູ່ໃນ 2 ບ້ານ ຢ່າງເລັ່ງຮ້ອນ ເພາະມໍ່ຈະພົດ ແຜນການປີ ຂອງ ໂຄງການ.

ເຖົ້າແກ່ອາວຸໂສ ຢູ່ເຂດນີ້ ລ້ວນແລ້ວແຕ່ນັກປາດອາຈານ ຜູ້ຊົງຄຸນວຸດທິ, ດັ່ງນັ້ນ ເພິ່ນຈິ່ງເຂົ້າໃຈໄດ້ງ່າຍກ່ຽວກັບວຽກງານສຳຫຼວດ ປົກປັກຮັກສາ. ບ້ານນີ້ ເປັນບ້ານເກົ່າເມືອງເດີມ ຕັ້ງມາໄດ້ 154 ປີ ໂດຍການນຳພາ ຂອງ ຫຼວງປູ່ສີທັມມາ. ຢູ່ບ້ານນີ້ ເຖົ້າແກ່ອາວຸໂສ ຫຼາຍຄົນບອກວ່າ ແຕ່ນີ້ຕໍ່ໄປຈະຮັກ ສາເອກະສານໃບລານໃຫ້ດີ, ເພາະຜ່ານມາມີການຕົກເຮ່ຍເສຍຫາຍຫຼາຍ. ແຕ່ຢ່າງໃດກໍ່ດີ ຊາວບ້ານນີ້ ຍັງຮັກສາຮີດຄອງປະເພນີ ແລະ ວັດທະນະທຳອັນດີ ງາມໄວ້ຢ່າງພົ້ນຄົງ, ຖືວັດວາສາສນາເປັນບ່ອນຫຼໍ່ຫຼອມກາຍອາຈາໃຈ ໃຫ້ເປັນຜູ້ມີສີນທຳ, ວຽກງານສຳຫຼວດ ໄດ້ດຳເນີນໄປເປັນເວລາ 4 ວັນ. ຈາກນີ້ກໍ່ໄປສູ່ບ້ານນາຊັບ ເຂດບ້ານນ້ຳກ່ຽງ ເຮັດການສຳຫຼວດພຽງ 2 ວັນ ກໍ່ສຳເລັດ ເນື່ອງຈາກ ເອກະສານມີໜ້ອຍ ແຕ່ຊາວບ້ານກໍ່ພູມໃຈນຳ ດີໃຈນຳ ເພາະ ວັດບ້ານນາຊັບ ກຳລັງໄດ້ຮັບການປະຕິສັງຂອນໃໝ່

☛

ຢູ່ຫລາຍໆອັນ ເພື່ອ ໄປສູ່ຄວາມສົມບູນແບບຂອງວັດ. ບ້ານນາຊັບ ຕັ້ງຢູ່ເຂດສອກຫຼີກ, ແຍກຈາກທາງເລກ 13 ເໜືອ ເຂົ້າເຂດນ້ຳກ້ຽງ ແລ້ວກໍ່ມີເສັ້ນ ທາງແຍກໄປສູ່ ນາຊັບ ໄດ້ຢ່າງສະບາຍໆ.

✳ ໜ່ວຍສຳຫຼວດ ໄດ້ກັບເຂົ້າສູ່ ເທດສະບານກຳແພງນະຄອນ ໂດຍການສົມທົບກັບ ພ.ສ.ລ. ກຳແພງນະຄອນ ລົງເຄື່ອນໄຫວສຳຫຼວດ ຢູ່ໃນ 3 ວັດ ຄືວັດ ທາຍໂສກ, ຄົກນີນ, ແລະ ວັດຈອມທອງ. ໜ່ວຍສຳຫຼວດ ໄດ້ເລີ່ມຢູ່ວັດທາຍໂສກ ເປັນວັດທຳອິດ ວັນທີ 9/2/94 ຈາກນັ້ນ ກໍ່ຕໍ່ໄປໃສ່ ວັດຄົກນີນ ແລະ ວັດຈອມທອງ ຕາມລຳດັບ, ໄດ້ໃຊ້ເວລາຢູ່ 8 ວັນ ( 9-16 /2/94 ) ກໍ່ສຳເລັດ.

ການເຄື່ອນໄຫວສຳຫຼວດ ຕາມຈຸດຕ່າງໆ ໃນເຂດ ກຳແພງນະຄອນ ຊຶ່ງໄດ້ເລີ່ມຕົ້ນແຕ່ ວັນທີ 13/10/1993 - 16/2/1994 ສາມາດເກັບກຳຂໍ້ມູນ ແລະ ຂຶ້ນທະບຽນປົກປັກຮັກສາໄດ້ທັງໝົດ 16.829 ຜູກ, ໃນນັ້ນທາດຊາຍຟອງມີ 4.519 ຜູກ ແລະ ເມືອງສີສັດຕະນາກ ມີ 727 ຜູກ.

ໜ່ວຍງານສຳຫຼວດ ຮ່ວມກັບ ວັດທະນະທຳເມືອງຕ່າງໆ ໄດ້ນຳພາພໍ່ແມ່ປະຊາຊົນ ກໍ່ຄືເຖົ້າແກ່ອາວຸໂສ ທຸກໆບ້ານ ທັນເຂົ້າສູ່ການປົກປັກຮັກສາ ວັດຖຸບູຮານ ສົມບັດອັນມີຄ່າຂອງບ້ານ, ໂດຍສະເພາະ ແມ່ນແນະນຳ ໃຫ້ປົກປັກຮັກສາຄຳພີໃບລານ, ໃຫ້ຄົ້ນຄວ້າ ແລະ ນຳໃຊ້ສິ່ງທີ່ເປັນປະໂຫຍດໃຫ້ແກ່ບ້ານ ແກ່ ສັງຄົມໃນຂັ້ນຕໍ່ໆ ໄປ. ໜ່ວຍງານສຳຫຼວດ ຍັງໄດ້ແນະນຳ ແລະ ກໍ່ສ້າງພະນັກງານວັດທະນະທຳແຕ່ລະເມືອງ ໃຫ້ຮູ້ຈັກການປົກປັກຮັກສາ ແລະ ການນຳໃຊ້ກ່ຽວກັບຄຳພີໃບລານ ຊຶ່ງວັດຖຸດັ່ງກ່າວນີ້ ໄດ້ສ່ອງແສງ ໃຫ້ເຫັນຄຸນຄ່າຂອງວັດທະນະທຳ ໃນທາງດ້ານຮູບປະທຳ ແລະ ນາມມະທຳ ແລະ ເປັນມູນມໍລະດົກທີ່ຕົກທອດ ມາຈາກນັກປາດອາຈານ ຮຸ່ນກ່ອນໆ, ເພື່ອໃຫ້ຍືນຍົງໄປເຖິງເຊັ່ນຫລັງໆໄດ້ເອົາເປັນຄູ່ມືເພື່ອຄົ້ນຄວ້າ ໃນບັນດາສາດຕ່າງໆ ຢູ່ໃນຄຳພີ.

ຊາວກຳແພງນະຄອນ ຫຼາຍເຂດຫຼາຍບ້ານ ຍັງຮັກສາຮີດຄອງປະເພນີ ອັນຈົບງາມຢ່າງບໍ່ໄລລະ ເຊັ່ນຮີດ 12 ຄອງ 14 ແຕ່ເຂົາເຈົ້າ ກໍ່ວິຕົກກັງວົນ ນຳລູກຫຼານໄວຮຸ່ນ, ທີ່ບໍ່ຢາກເຄົາລົບນັບຖື ຮີດຄອງປະເພນີ, ຖືເບົາທຳມະຄຳສັ່ງສອນ, ອັນເປັນສັດຈະທຳທີ່ຮຸ່ນພໍ່ແມ່



ຕາຍາຍພາກະທຳມາ ແຕ່ເຂົາເຈົ້າ ກໍ່ອຸ່ນໃຈ ທີ່ໄດ້ເຫັນພະນັກງານສຳຫລວດໃບລານ ລົງໄປນຳພາ ປົກປັກຮັກສາຄຳພີໃບລານ ໄວ້ໃຫ້ຍືນຍົງ ເພາະໃນຄຳພີນີ້ ສ່ວນໃຫຍ່ ກໍ່ເຕັມໄປດ້ວຍທຳມະຄຳສອນທີ່ດີ, ນອກນີ້ ກໍຍັງມີວັນນະກຳ ແລະ ອື່ນໆ ທີ່ໜ້າສົນໃຈ, ຕໍ່ໜ້າລູກຫຼານຂອງ ເຂົາເຈົ້າກໍ່ຈະໄດ້ອ່ານ ຫລື ຄົ້ນຄວ້າຮ່ຳຮຽນ ແລະ ນຳເອົາແບບແຜນການ ດຳລົງຊີວິດອັນດີງາມ ມາສູ່ສັງຄົມ ./.

***ກະອິນ - ລາຍງານ***

# ນໍລະດົກ ຂອງ ຊາວເມືອງນາຊາຍທອງ

*ໂດຍ ຈັນສະໝຸດ ທິລະກຸນ*

ເປັນເວລາ 19 ມື້ ນັບແຕ່ວັນທີ 17 ເດືອນມັງກອນ ເຖິງວັນທີ 5 ກຸມພາ 1994 ທີ່ໜ່ວຍສຳ ຫຼວດໜັງສືໃບລານ ໄດ້ລົງເຄື່ອນໄຫວ ຢູ່ໃນເຂດເມືອງ ນາຊາຍທອງ ສຳເລັດຈຳນວນ 6 ວັດ ຄື : ວັດນາຂ່າ, ວັດໂພນມ່ວງ, ວັດຮ່ອງງົວ, ວັດພະບາດ ໂພນຄ້ອງ (ເຂດນາຂ່າ), ວັດອີໄລໃຕ້ (ເຂດອີໄລ) ວັດນາຊັບ ( ເຂດນ້ຳກ້ຽງ ) ສາມາດ ປົກປັກຮັກສາ ໜັງສືໃບລານໄດ້ທັງໝົດ 214 ມັດ, 2619 ຜູກ. ໂດຍໄດ້ເລີ່ມເປີດບັ້ນສຳຫຼວດ ຢູ່ທີ່ວັດບ້ານນາຂ່າ ທາງພະສົງ ສາມະເນນ ອຳນາດການປົກຄອງ ພໍ່ແມ່ປະຊາຊົນ ບ້ານນາຂ່າ ຄອຍໃຫ້ການຕ້ອນຮັບ ພິເສດ ຫົວໜ້າໂຄງການ ທ່ານ ນາງ ດາລາ ກັບລະຍາ ກໍ່ໄດ້ມາຮ່ວມເປີດບັ້ນສຳຫຼວດຄັ້ງນີ້ດ້ວຍ ຈຶ່ງເຮັດໃຫ້ບັນຍາກາດ ອົບອຸ່ນ ເປັນພິເສດ ພໍ່ແມ່ປະຊາຊົນຜູ້ເຖົ້າຜູ້ແກ່ ຜູ່ໄດ້ຍິນຂ່າວ ກໍ່ພາກັນມາ ຊ່ວຍເຊັດຖູໜັງສືໃບລານກັນ ເຕັມສາລາໂຮງທຳ.

ວັດອີໄລໃຕ້ ເປັນວັດທີ 5 ທີ່ໄດ້ມີ ການລົງ ສຳຫຼວດ ເປັນວັດໜຶ່ງທີ່ເກົ່າແກ່ ໃນເຂດ ເມືອງ ນາຊາຍທອງ ມີອາຍຸ 150 ກວ່າປີ, ເຄີຍມີ ນັກບວດ ຜູ້ທີ່ມີຄວາມຮູ້ ແລະ ເປັນທີ່ ເຄົາລົບ ຂອງຊາວບ້ານ ຄືຍາທ່ານ ທຳມາ ຈຶ່ງເປັນວັດທີ່ມີ ເອກະສານໃບລານ ຫຼາຍພໍສົມຄວນ ແຕ່ທີ່ຜ່ານມາ ໄດ້ຖືກໄຟໄໝ້ ເປັນຈຳນວນຫຼາຍ ຈຶ່ງເຫຼືອພຽງ 548 ຜູກ ແຕ່ກໍ່ຫຼາຍກວ່າອີກ 5 ວັດ ແລະ ຍັງມີ ເອກະສານທີ່ສຳຄັນເຊັ່ນ : ສ້ອຍສາຍຄຳ, ທຳມະສາດຫຼວງ, ພະລາມ...



ໃນຕອນເຊົ້າຂອງວັນທີ 5 ກຸມພາ 1994 ທາງອຳນາດການປົກຄອງເຂດນາຂ່າ ເຫັນດີຈັດພິທີສະຫຼຸບໃນ 4 ວັດ ໃນມື້ດຽວໂລດ ຈຶ່ງເຮັດໃຫ້ມີ ອອກຕົນຍາດໂຍມມາຮ່ວມ ເປັນຈຳນວນຫຼວງຫຼາຍ, ໃນພິທີດັ່ງກ່າວ **ທ່ານ ຈັນເພັງ** ຮອງປະທານ ແນວລາວສ້າງຊາດ ກຳແພງນະຄອນ ກໍ່ໄດ້ເດີນທາງມາ ໂອ້ລົມກັບຊາວບ້ານ ກ່ຽວກັບທິດທາງ ແລະ ນະໂຍບາຍ ຂອງລັດຖະບານເຮົາ ໃນການຟື້ນຟູ ແລະ ປົກປັກຮັກສາມໍລະດົກ ທາງພູມປັນຍາ ສ່ວນຍາທ່ານໃຫຍ່ ວັດນາຂ່າກໍ່ຄື ພໍ່ແມ່ ປະຊາຊົນ ເພິ່ນກໍ່ຍິ່ງມີຄວາມຮູ້ສຶກ ໂລ່ງອົກໂລ່ງໃຈ ຕໍ່ໂຄງການຂອງພວກເຮົາ.

**ທ່ານ ສົມເພັດ ສີລີວັດ** ຄະນະແນວໂຮມເມືອງເພິ່ນຍັງໄດ້ເວົ້າກັບຂ້າພະເຈົ້າວ່າ " ຖ້າຫາກໂຄງການນີ້ ມີທິດທາງທີ່ຈະລິດຈະນາ, ພິມເຜີຍແຜ່ ເປັນຕົວໜັງສື ສະໄໝແລ້ວ ພວກເຮົາຈະມີການຈັດຕັ້ງ ເຜີຍແຜ່

### ເອກະສານໃບລານກັບ

# ການຄົ້ນຄ້ວາປະລິວັດ ແລະ ດັດໃຊ້

*ສໍາລິດ ບົວສີສະຫວັດ*

ເອກະສານໃບລານຫຼືໜັງສືຜູກໃບລານ ແມ່ນສົມບັດອັນລໍ້າຄ່າເປັນມໍລະດົກຕົກທອດຈາກຍຸກບູຮານ ມາຮອດຍຸກເຮົາ ທີ່ຍັງເຫຼືອຢູ່ກໍ່ຫຼາຍທີ່ຫາຍສາບສູນໄປແລ້ວກໍ່ມີ ສ່ວນທີ່ສ້າງໃໝ່ຕື່ມນັ້ນແມ່ນມີໜ້ອຍຢ່າງໃດກໍ່ດີ ທີ່ຍັງບໍ່ປ່ຽນແປງນັ້ນ ແມ່ນຄຸນຄ່າສາລະເນື້ອໃນອັນເປັນ ສັດຈະທໍາ ຫາກວ່າຮູ້ຈັກໄຈ້ແຍກ ເລືອກໃຊ້ໃຫ້ເໝາະສົມກັບການລະ ໂອກາດ ແລະ ຍຸກສະໄໝ ຈະຮັບໃຊ້ສັງຄົມໄດ້ເປັນຢ່າງດີ.

ແຕ່ຄົນໃນສະໄຫມນີ້ ຍຸກນີ້ຜູ້ທີ່ຍັງອ່ານໄດ້ ຂຽນເປັນ ແລະ ສາມາດເຂົ້າໃຈເລິກເຊິ່ງໃນຄໍາພີຕ່າງໆນັ້ນ ນັບມື້ແຕ່ຈະຫຼຸດໜ້ອຍຖອຍລົງເລື້ອຍໆ. ຄັນຈະຈັດເຂົ້າຫຼັກສູດສຶກສາທົ່ວໄປ ກໍ່ເປັນບັນຫາ ນອກຈາກພະສົງສາມະເນນ ເຊິ່ງມີເລື່ອງນີ້ເປັນພາລະກິດໂດຍກົງ. ສໍາລັບປະຊາຊົນທົ່ວໄປ ຍາກທີ່ຈະມີໂອກາດໃຊ້ ຍ້ອນອຸປະສັກດັ່ງກ່າວ.

ດັ່ງນັ້ນ ຖ້າປະສົງຢາກເຜີຍແຜ່ສາລະເນື້ອໃນ ທີ່ບໍ່ເລືອກການລະສະໄໝ ຈຶ່ງຄວນປະລິວັດ ແລະ ດັດໃຊ້ບາງຄໍາພີ ທີ່ເຫັນສົມຄວນ ເລືອກເຟັ້ນເອົາອອກມາ ເຜີຍແຜ່ ໂດຍແນໃສ່ຄຸນປະໂຫຍດແລະ ເປົ້າໝາຍ 2ປະການຄື : **ສະໜອງຄວາມຕ້ອງການຂອງຄົນຮຸ່ນໃໝ່ ແລະ ເຜີຍພູມປັນຍາ ຂອງຄົນຮຸ່ນເກົ່າ ເຮັດ ໃຫ້ຄວາມ ສໍາພັນດ້ານສະຕິປັນຍາ ໃນອະດີດ ກັບປັດຈຸບັນ ຕິດຈອດກັນອັນເປັນການສືບທອດປະການໜຶ່ງ.**

ແຕ່ທັງໝົດທີ່ກ່າວນີ້ຕ້ອງໄດ້ພິຈາລະນາ ຮໍ່າຮອນກ່ອນ ຮ້ອນເອົາແຕ່ສາຣະແກ່ນແທ້ແຍ້ສຸດຍອດ ຂອງຄໍາພີດີກາ ມາສະໜອງ ຄວາມຮຽກຮ້ອງຕ້ອງການເພື່ອໃຫ້ຮັບໃຊ້ສັງຄົມປັດຈຸບັນ. ໃນບັ້ນນີ້ ເຫັນວ່າ ມີ ຢູ່ 2 ຂັ້ນຕອນຄື : **ການປະຣິວັດ** (Transliteration) **ກັບການດັດໃຊ້** (Adaptation) .

ການປະຣິວັດ ແນໃສ່ເພື່ອໃຊ້ຄົ້ນຄວ້າ ປຽບທຽບຈັ່ງຊາ ຂອງນັກຄົ້ນຄວ້າ ປັນຍາຊົນ ການດັດໃຊ້ ແມ່ນເພື່ອໃຫ້ຄົນທົ່ວໄປໄດ້ຊົມໃຊ້ ແລະ ເພື່ອເຍົາວະຊົນ ຈະໄດ້ ສຶກສາງ່າຍຂຶ້ນ.

ເນື່ອງຈາກມີເປົ້າໝາຍແຕກຕ່າງກັນ ວິທີວິທຍາໃນການຄົ້ນຄວ້າ ກໍ່ຕ້ອງຕ່າງກັນໄປແດ່ ແຕ່ສິ່ງທີ່ ບໍ່ຕ່າງກັນເລີຍນັ້ນ ແມ່ນກ່ອນອື່ນໝົດ ຜູ້ທີ່ຈະປະຣິວັດ ແລະ ດັດໃຊ້ ຕ້ອງຕີບັນຫາ ຫຼື ອຸປະສັກເບື້ອງຕົ້ນໃຫ້ແຕກ ເສຍ

---

ມໍລະດົກ ຂອງ ...

ກັນຢ່າງກວ້າງຂວາງ ທັງນັກຮຽນ, ນັກສຶກສາ ພໍ່ແມ່ປະຊາຊົນ ເພື່ອໃຫ້ເຂົາເຈົ້າຮູ້ເຖິງຄຸນຄ່າ ຕໍ່ ເອກະສານດັ່ງກ່າວ ແຕ່ທີ່ຜ່ານມາ ເອກະສານໃບລານ ຍັງບໍ່ໄດ້ນໍາໃຊ້ຫຼາຍປານໃດ ເພາະຄົນທໍາມະດາ ບໍ່ສາມາດ ອ່ານໄດ້ ມັນຈຶ່ງມີຜົນສະທ້ອນ ເຖິງການປົກປັກຮັກສານໍາອີກ..."

ຕັ້ງແຕ່ມື້ເລີ່ມຕົ້ນລົງມາ ຂອງຄະນະໜ່ວຍ ສໍາຫຼວດ ກໍ່ເຫັນວ່າ ໄດ້ຮັບຄວາມສະໜັບສະໜູນ ຈາກຄູບາອາຈານ, ພໍ່ແມ່ປະຊາຊົນ ພ້ອມທັງອໍານາດ ການປົກຄອງ ທຸກພາກສ່ວນ ສະແດງຢູ່ບ່ອນວ່າ ການອານາໄມເຊັດຖູ ໜັງສືໃບລານ ໃນແຕ່ລະວັດ ເຂົາເຈົ້າ ກໍ່ພ້ອມໃຈກັນມາຊ່ອຍເຕັມສາລາ ເຖິງແມ່ນວ່າ ຈະເປັນ ລະດູເຮັດ ☞

ກ່ອນ ນັ້ນໝາຍຄວາມວ່າ ຕົນເອງຕ້ອງສຶກສາ ໃຫ້ເຂົ້າໃຈ ເລິກເຊິ່ງ ພໍສົມຄວນໃນດ້ານພາສາສາດ ແລະ ຄຳໝາຍເນື້ອໃນຕົວຈິງ ຂອງເລື່ອງນັ້ນໆ ກ່ອນ. ທາງທີ່ດີຖ້າເປັນໄປໄດ້ໃຫ້ຊອກຫາຫຼາຍຜູກຫຼາຍມັດ ມາສົມທຽບກັນ ໄດ້ຫຼາຍເທົ່າໃດຍິ່ງດີ ເພາະຕາມບົດຮຽນຜ່ານມາ ແຕ່ລະຜູກແຕ່ລະມັດ ບໍ່ຄ່ອຍມີຄວາມ ຜິດພາດຊ້ຳກັນ. ນີ້ຈະຊ່ວຍບໍ່ໃຫ້ເຮົາປັບສະໜອງມາກເກີນໄປ ແລະ ເຮັດໃຫ້ເຊື່ອໝັ້ນ ຮັບປະກັນ ດ້ານວິຊາການ ໄດ້ດີອີກດ້ວຍ.

**ການປະຣິວັດ** ໝາຍເຖິງການປ່ຽນ ຫຼື ຖ່າຍທອດລະບົບອັກສອນ ຫລື ຕົວໜັງສືແບບໜຶ່ງໄປສູ່ ລະບົບອັກສອນ ຫລື ຕົວໜັງສືອີກແບບໜຶ່ງ ເຊິ່ງຄົນສ່ວນຫຼາຍຮູ້ ແລະ ເຂົ້າໃຈ ທັງນິຍົມໃຊ້ໃນປັດຈຸບັນ. ສ່ວນ ເນື້ອໃນສາຣະສຳນວນພາສາລີລາໃນການປະພັນ ບໍ່ມີຫຍັງປ່ຽນແປງ ນອກຈາກຈະແກ້ໄຂໃນສ່ວນທີ່ ແນ່ໃຈວ່າຜິດ ແລະ ມີເຫດຜົນພຽງພໍ ສາມາດອະທິບາຍໄດ້ ຕາມຫຼັກວິຊາການ ຖ້າສົງໄສ ໃຫ້ຄົງໄວ້ ຕາມເດີມ ແລະ ມີຄວາມເຫັນໄວ້ຕ່າງຫາກ ນັ້ນແມ່ນຫຼັກການ ໃນການ ປະຣິວັດໂດຍຫຍໍ້.

ສ່ວນ**ການດັດໃຊ້** ໝາຍເຖິງການປ່ຽນ ທັງລະບົບອັກສອນ ຫລື ແບບຕົວໜັງສື ແລະ ສຳນວນພາສາ ທັງລີລາ ການປະພັນໃຫ້ງ່າຍກະທັດຮັດ ທັນສະໄໝແນໃສ່ຮັບໃຊ້ ມະຫາຊົນທົ່ວໄປ ໂດຍສະເພາະແມ່ນເຍົາວະຊົນແຕ່ເນື້ອໃນສາຣະຂອງເລື່ອງໃຫ້ຍັງຄົງຢູ່ຕາມເດີມ ບໍ່ຄວນບິດເບືອນ ຫລື ປ່ຽນຄຳໝາຍ ເພາະຈະເສຍ ພາບພົດ ຫລື ຂາດສັດຈະທຳ.

ທັງ 2 ວິທີການ ທີ່ກ່າວມານີ້ ແມ່ນການນຳໃຊ້ສາຣະເນື້ອໃນໜັງສືຜູກໃບລານ ໃນສັງຄົມແຫ່ງຄົນ ຮຸ່ນໃໝ່ ໃຫ້ເໝາະສົມກັບການປ່ຽນແປງ ທາງສັງຄົມ ແລະ ສິ່ງແວດລ້ອມ. ສ່ວນການນຳໃຊ້ຂອງພະເຈົ້າພະສົງ ໃນວົງການ ຂອງພະພຸທະສາດສະໜາ ນັ້ນ ເຫັນ ວ່າ ຄວນໃຊ້ ຕາມ ປະເພນີດັ້ງເດີມ ທີ່ເຄີຍປະຕິບັດມາ ແມ່ນໃນປັດຈຸບັນ ຈະຫ່າງເຫີນໄປແດ່ ແຕ່ກໍຍັງ ບໍ່ທັນ ຫຼາສວາຍ ຄວນຮ່ຳຮຽນ ແລະ ຟື້ນຟູຕາມກຳລັງ ແລະ ສັກຍະພາບຕົວຈິງ ທັງນີ້ເພື່ອຮັກສາໄວ້ ເຊິ່ງ ວັດທະນະທຳ ເກົ່າແກ່ຂອງຊາດ ແລະ ສັດທາຂອງສາທຸຊົນ ທີ່ມີ ຕໍ່ພະພຸທະສາດສະໜາ ສືບທອດ ມາຫຼາຍ ສະຕະວັດ ແລ້ວ.

ຂອງດີທີ່ມີຢູ່ໃນ ໜັງສືໃບລານນັ້ນ ມີຢູ່ມາກ ຫຼາຍສຸດແທ້ແຕ່ເຮົາຈະເລືອກໃຊ້ ຕາມວັດຖຸປະສົງ ອຸປະມາດັ່ງປ່າໄມ້ທີ່ມີຄ່າຕໍ່ ຊີວິດ ມະນຸດ ແລະ ສັດ ມີທັງໄມ້ຈວງ ໄມ້ຈັນ ໄມ້ກໍສ້າງ ໄມ້ເປັນຢາ, ໄມ້ປະເພດ ໝາກ ແລະ ຜັກ ເຮົາຮັກທຳມະຊາດພູຜາປ່າໄມ້ ສັນໃດ ກໍຄວນ ໃຫ້ຄຳຮັກ ແລະ ຫວງແຫນ ໜັງສືຜູກໃບລານ ສັນນັ້ນ ສິຣິມຸງຄຸນຈະມີແກ່ຕົນ ແລະ ສ່ວນລວມ ໂດຍບໍ່ຕ້ອງສົງໄສ. ໄລຍະເວລາ ຈະເປັນການພິສູດ !

○

---

ນາແຊງກໍ່ຕາມ ພິເສດ ກໍ່ແມ່ນ ທ່ານ ບຸນທິ່ນ ຄະນະແນວລາວສ້າງຊາດເມືອງ ແລະ ທ່ານ ບຸນເຊີຍ ຫ້ອງການ ວັດທະນະທຳເມືອງ ໄດ້ລົງໃກ້ຊິດຕິດແທດ ກັບຄະນະໜ່ວຍສຳຫຼວດ ດ້ວຍຄວາມ ເອົາໃຈໃສ່.

ເມືອງນາຊາຍທອງ ກໍ່ເປັນເມືອງໜຶ່ງ ທີ່ມີພື້ນຖານ ວັດທະນະທຳ ມີຮີດຄອງປະເພນີ ປະຊາຊົນ ນັບຖືວັດວາສາດສະໜາ ເປັນຕົ້ນຕໍຫລາຍໆ ວັດກໍ່ໄດ້ມີການປົວແປງ ເຊັ່ນ ຢູ່ວັດນາຂ່າ, ພະບາດໂພນສ້ອງ, ຮ່ອງງົວ, ນາຊັບ, ດ້ວຍສັດທາ ແລະ ຄວາມສາມັກຄີ ຂອງຊາວບ້ານເອງ ແລະ ຄິດວ່າການປົກປັກຮັກສາ ໜັງສືເກົ່າແກ່ ກໍ່ຈະແມ່ນກຳລັງຕົ້ນຕໍຂອງຊາວບ້ານ ບອກໃສ່ພະສົງສະມາເນນ ແລະ ອຳນາດການປົກຄອງ ເຊິ່ງແມ່ນສ່ວນໜຶ່ງ ຂອງ ວັດທະນະທຳໃນເມືອງນາຊາຍທອງ ກໍ່ຄືຂອງຊາດ./.

ບົດສະເໜີ

# ໜັງສືໃບລານລາວ : ການຕົກເຮ່ຍເສຍຫາຍ ແລະ ສາເຫດ

*ທອງໃບ ໂພທິສານ*

ມີ ນັກປາດອາຈານ ຫຼາຍທ່ານ ນັບທັງຄູບາອາຈານ, ພະສົງ, ຜູ້ອາວຸໂສ, ຜູ້ເຖົ້າ ຜູ້ແກ່ ແລະ ຊາວ ບ້ານ ທີ່ຂ້າພະເຈົ້າ (ຜູ້ຂຽນ) ມີໂອກາດໄດ້ຟັງຄຳຄິດຄຳເຫັນ ແລະ ພົບປະໂອ້ລົມ ກ່ຽວກັບ ໜັງສືໃບລານລາວເຮົາໃນປະຈຸບັນ, ສົມທົບກັບປະສົບການຕົວຈິງ ຂອງຕົນເອງໃນເວລາລົງເຄື່ອນໄຫວ ວຽກງານສຳຫລວດ ແລະ ປົກປັກຮັກສາ ໜັງສືໃບລານ ຮ່ວມກັບທີມງານ ນັກສຳຫຼວດ ຂອງໂຄງການ ປົກປັກຮັກສາໜັງສືໃບລານລາວ ໃນຖານະ ຜູ້ປະສານງານໂຄງການ ແລະ ຊ່າງເຕັກນິກ, ຂ້າພະເຈົ້າ ພໍສະຫຼຸບຄວາມ ໄດ້ວ່າ ໜັງສືໃບລານລາວ ຍັງມີຢູ່ເປັນຈຳນວນຫຼວງຫຼາຍ ໃນທົ່ວປະເທດ.

ແຕ່ນັ້ນມັນເປັນພຽງຄວາມເຫັນ ທີ່ມີລັກສະນະລວມໆ ບໍ່ສາມາດກຳນົດ ຈຳນວນໂຕເລກທີ່ແນ່ນອນ ແລະ ຊັດເຈນໄດ້. ແຕ່ທີ່ແທ້ໆ ກໍຄືວ່າ ມີຫຼາຍໆ ນັ້ນເອງ. ການທີ່ມີໂຄງການປົກປັກຮັກສາໜັງສືໃບລານ ເກີດຂຶ້ນ ແລະ ພວມເຄື່ອນໄຫວ ຢູ່ໃນຂະນະນີ້ ນັບວ່າເປັນປາກົດການທີ່ໃໝ່ ກ່ຽວກັບວຽກງານການຟື້ນຟູ ແລະ ປົກປັກຮັກສາ ເອກະສານບູຮານ ທີ່ມີຄຸນຄ່າດັ່ງກ່າວ. ແຕ່ລະວັດ ທີ່ໄດ້ຜ່ານການສຳຫຼວດກວດກາ ແລະ ຂຶ້ນບັນຊີເພື່ອປົກປັກຮັກສາ ຈາກທາງໂຄງການແລ້ວ, ຈະມີຕົວເລກ ທີ່ຊັດເຈນ ບອກໃຫ້ຮູ້ຈຳນວນ ຜູກ, ມັດ, ເລື່ອງ ຫຼື ແມ່ນແຕ່ຈຳນວນໃບລານ ການບັນທຶກຂໍ້ມູນ ດ້ວຍລະບົບຄອມພິວເຕີ ນັບວ່າເປັນວິທີ ວິທະຍາ ທີ່ກ້າວໜ້າທັນສະໄໝ ແລະ ຈິງຈັງອີກບາດກ້າວໜຶ່ງ ຂອງວຽກງານ ດ້ານນີ້... ແລະ ໃນຍຸກນີ້.

ເຖິງວ່າ ຂ້າພະເຈົ້າ ບໍ່ໄດ້ຜ່ານການສຶກສາ ຮ່ຳຮຽນໃນເລື່ອງສູດ ເລື່ອງທັມມາກ່ອນກໍຕາມ, ແຕ່ໃນຄວາມຮູ້ສຶກຂອງຜູ້ທີ່ໄດ້ສຳຜັດກັບວຽກງານນີ້ ແລະ ໃນຄວາມຮູ້ສຶກຂອງຄົນຮຸ່ນໃໝ່ແລ້ວ, ຂ້າພະເຈົ້າ ມີຄວາມພາກພູມໃຈ, ທະນົງໃຈເປັນຢ່າງຍິ່ງ ຕໍ່ຄວາມສາມາດ ດ້ານພູມປັນຍາ ຂອງຜູ້ເປັນບັນພະບູລຸດລາວ ໃນແຕ່ລະຍຸກສະໄໝ. ສິ່ງທີ່ຂ້າພະເຈົ້າ ຈະສາທະຍາຍຕໍ່ໄປນີ້ ມັນເປັນພຽງຄວາມຮູ້ສຶກ ແລະ ຄວາມເຫັນ ສ່ວນໜຶ່ງຈາກພູມປັນຍາ ທີ່ຍັງອ່ອນນ້ອຍ ເພື່ອປະກອບສ່ວນສຶກສາຄົ້ນຄວ້າ ສະພາບຄວາມເປັນຈິງ ຂອງ ໜັງສືໃບລານລາວ ໃນປະຈຸບັນ.

ຢູ່ໃນທຸກໆ ວັດບ້ານເຮົາ ຈະມີໜັງສືໃບລານ, ຢ່າງໜ້ອຍທີ່ສຸດ ກໍແມ່ນໜັງສື ເລື່ອງພະເວດ " ເວສສັນຕຣະຊາດົກ " ທີ່ໃຊ້ເທດໃນບຸນມະຫາຊາດ ຫຼື ບຸນພະເວດປະຈຳທຸກໆປີ ແລະ ໜັງສືທີ່ໃຊ້ເທດ, ສູດ ເຊັ່ນ : ສະຫຼອງຕ່າງໆ ( ນານານິສົງ), ປັນຍາປາລະມີ, ອຸນຫັດສະວິໄຊ, ທິພະມົນ... ນອກຈາກນີ້ ກໍຍັງມີ ໜັງສືກ້ອມ (ລານກ້ອມ) ປະເພດມົນຄາຖາ, ຕຳລາຢາ, ໂຫລາສາດ, ສູດຂວັນ ແລະ ອື່ນໆ. ສັງ ເກດໄດ້ວ່າ ວັດໃດທີ່ເກົ່າແກ່ (ບ້ານກໍເປັນບ້ານເກົ່າແກ່ດັ້ງເດີມເຊັ່ນກັນ) ເຄີຍມີນັກປາດອາຈານ ຫລື ເຄີຍ ເປັນສຳນັກ ຮຽນຮູ້ຂອງຝ່າຍສົງມາກ່ອນ, ບ່ອນນັ້ນຈະມີໜັງສືໃບລານຄົບຖ້ວນ ແລະ ຫຼວງຫຼາຍ ກວ່າບ່ອນອື່ນໆ ເທົ່າທີ່ ຂ້າພະເຈົ້າ ສາມາດເກັບກຳຂໍ້ມູນໄດ້ໃນເບື້ອງຕົ້ນ, ອົງເຂດທີ່ຍັງມີໜັງສືໃບລານຫຼາຍ ໃນປະຈຸບັນ ໄດ້ແກ່ :

☞

ກຳແພງນະຄອນ, ແຂວງວຽງຈັນ, ຫຼວງພະບາງ, ຄຳມ່ວນ, ສະຫວັນນະເຂດ ແລະ ຈຳປາສັກ. ເທົ່າທີ່ເຄີຍສຳຫຼວດມາໃນເຂດດັ່ງກ່າວນີ້ ບາງວັດຈະມີໜັງສືຕັ້ງແຕ່ 500- 1.000 ຜູກຂຶ້ນໄປ ຫຼາຍໆ ຄົນໄດ້ໃຫ້ ທັດສະນະວ່າ ໜັງສືໃບລານທີ່ເຫຼືອຍັງຢູ່ໃນປະຈຸບັນເປັນພຽງ ໜຶ່ງສ່ວນສິບຂອງ ເອກະສານ ທີ່ມີຢູ່ແຕ່ກ່ອນໆ. ອັນໃດຄື ສາເຫດການຕົກເຮ່ຍເສຍຫາຍຂອງເອກະສານ ເຫລົ່ານີ້? ຜ່ານການຊອກຮູ້ຮ່ຳຮຽນ ກັບວຽກງານໂຕຈິງມາໄດ້ໄລຍະໜຶ່ງນີ້, ຂ້າພະເຈົ້າພໍສະຫຼຸບສາເຫດ ທີ່ສຳຄັນຕ່າງໆ ໄດ້ດັ່ງນີ້ :

**1. <u>ຄວາມກ້າວໜ້າທາງດ້ານເຕັກໂນໂລຊີ</u>**

ອັນນີ້ພາໃຫ້ເກີດມີ ການປ່ຽນແປງຫຼາຍດ້ານ ເປັນຕົ້ນ : ດ້ານການເມືອງ, ເສດຖະກິດ ແລະ ສັງຄົມ. ທີ່ຫັນປ່ຽນໄວທີ່ສຸດ ກໍ່ຄືວັດຖຸ ແລະ ຈິດໃຈ. ເມື່ອເກີດມີ ເຕັກນິກການພິມທີ່ກ້າວໜ້າ, ມີການນຳໃຊ້ເຈັ້ຍ ເຮັດໃຫ້ ອົງເຂດວຽກງານດ້ານນີ້ ມີຄວາມສະດວກວ່ອງໄວທັນໃຈກວ່າຍຸກສະໄໝກ່ອນໆ. ຈາກເຫດຜົນ ດັ່ງກ່າວການນິຍົມຈານ (ຂຽນ) ໜັງສືໃບລານ ກໍ່ລົດໜ້ອຍລົງ. ພະສົງສາມະເນນເອງ ກໍ່ຫັນໄປສົນໃຈນຳໃຊ້ ປັ້ມຜີນ ແບບໃໝ່ ໃນການເຫດສູດຕ່າງໆ. ໝາຍຄວາມວ່າການສືບຕໍ່ຈານ (ຂຽນ)ເອກະສານໃບລານ ຈະບໍ່ຫຼາຍ ຄືກັບເມື່ອຮ້ອຍປີກ່ອນພຸ້ນອີກແລ້ວ. ໜັງສືໃບລານ ທີ່ມີຢູ່ກໍ່ກຸດທຽມ ແລະເສຍຫາຍໄປ ຍ້ອນກາລະ ເວລາ ທັງບໍ່ໄດ້ຮັບຄວາມເອົາໃຈໃສ່ ປົກປັກຮັກສາ ເທົ່າທີ່ຄວນ.



**2. <u>ໄພພິບັດຈາກສົງຄາມ</u>**

ສົງຄາມທີ່ເກີດຂຶ້ນ ໃນແຕ່ລະຍຸກ ແຕ່ລະສະໄໝໃນບ້ານເຮົາ, ໄດ້ກໍ່ໃຫ້ເກີດຄວາມເສຍຫາຍທາງ ດ້ານຊີວິດ ແລະ ຊັບສິນຂອງບ້ານເມືອງ ເປັນຈຳນວນ ຫຼວງຫຼາຍ, ໃນນັ້ນ ກໍ່ລວມທັງໜັງສືໃບລານ ທີ່ຖືກລັກລອບກອບໂກຍ ແລະ ຖືກເຜົາຜານຈົນນັບບໍ່ຖ້ວນ. ບາງ ກໍລະນີ, ໃນເວລາເກີດສົງຄາມ ພະສົງ ແລະ ຊາວບ້ານ ໄດ້ພາກັນເອົາໜັງສືໃບລານໄປຊຸກເຊື່ອງ ໄວ້ໃນທີ່ ປອດໄພເປັນຕົ້ນຢູ່ຖ້ຳ ຢູ່ພູແຫ່ງຕ່າງໆ ພາຍລຸນມາ ກໍ່ບໍ່ມີໃຜ ພົບເຫັນ ຈຶ່ງສູນຫາຍໄປຢ່າງໄຮ້ຮ່ອງຮອຍອີກເຊັ່ນກັນ. ນອກຈາກນີ້ ຍ້ອນສະພາບ ຄວາມປັ່ນປ່ວນວຸ້ນວາຍຂອງບ້ານເມືອງ, ບັນດານັກປາດ ຄູບາອາຈານ ກໍ່ບໍ່ມີໂອກາດສຶກສາ ຄົ້ນຄວ້າ ຮ່ຳຮຽນໄດ້ ຢ່າງເປັນປົກກະຕິ ຄື ຄືກັບສະໄໝບ້ານເມືອງດີ ປີເມືອງກວ້າງ.

**3. <u>ໄພທຳມະຊາດ (ໄຟໄໝ້, ນ້ຳຖ້ວມ)</u>**

ເປັນການເສຍຫາຍ ທີ່ໜັກໜ່ວງ ແລະຫຼວງຫຼາຍ ອີກຢ່າງໜຶ່ງ ທີ່ໄດ້ ເກີດຂຶ້ນຢູ່ ຫຼາຍ ວັດໃນທົ່ວປະເທດ, ເປັນຕົ້ນ: ໄຟໄໝ້ກຸຕິ ສາລາ(ອາຮາມ) ຫໍແຈກ, ສິມ, ຫໍກອງ ທີ່ເປັນບ່ອນເກັບມ້ຽນ ວັດຖຸທີ່ມີຄ່າໃນວັດ ເປັນຕົ້ນພະພຸທຮູບ, ໜັງສືໃບລານ ແລະ ອື່ນໆ. ມີຫຼາຍວັດທີ່ເຄີຍເກີດອັກຄີໄພມາແລ້ວ ຈົນບໍ່ມີ ໜັງສືໃບລານ ເຫຼືອຈັກຜູກເລີຍ. ອຸທຸກະໄພ ຫລື ນ້ຳຖ້ວມ ກໍ່ເຄີຍ ໄດ້ກໍ່ ຄວາມເສຍຫາຍ ແກ່ໜັງສືໃບລານ ເຊັ່ນກັນ

☞

ແຕ່ກໍ່ບໍ່ຮ້າຍແຮງເທົ່າກັບໄຟໄຫມ້ ເພາະມັນເກີດຂື້ນຢູ່ເປັນບາງທ້ອງຖິ່ນ ແລະ ບາງປີເທົ່ານັ້ນ.

4. <u>ຫນູ, ປອກ, ມອດ, ແມງສາບ</u>

ສັດ 4 ຈຳພວກນີ້ ໄດ້ກໍ່ຄວາມເສຍຫາຍແກ່ໜັງສືໃບລານຢູ່ເກືອບທຸກໆວັດ ໃນທົ່ວປະເທດ. ພວກມັນທຳລາຍໜັງສືໃບລານຢ່າງວ່ອງໄວ ແລະ ເປັນຈຳນວນຫຼວງຫຼາຍ, ຢູ່ບາງວັດ ຖືກພວກມັນທຳລາຍ ຈົນໝົດທັງຕູ້ ຫລື ຫີບ, ຮ້າຍແຮງກວ່າຫນູ ແມ່ນປອກ ແລະມອດ. ໂຕມອດ ດັ່ງກ່າວນີ້ ເກີດຈາກໃບລານເອງ, ຖ້າຫາກໜັງສືໃບລານ ເກັບມ້ຽນໄວ້ໃນທີ່ອັບໆ ອາກາດບໍ່ລ່ວງເປັນເວລານານໆ ແຮມປີ ໂດຍບໍ່ມີ ການກວດກາ ແລະເອົາອອກທຳຄວາມສະອາດຈັກເທື່ອ. ສ່ວນແມງສາບຈະໄຂ່ ແລະ ຍ່ຽວໃສ່ ຫນັງສືໃບລານ ທີ່ບໍ່ມີຜ້າຫໍ່ ເຮັດໃຫ້ໃບລານ ແຕ່ລະແຜ່ນຕິດກັນ ຫລື ຖືກມັນເລຍ ເຮັດໃຫ້ຕົວໜັງສືລຶບ ອ່ານບໍ່ຮູ້ເລື່ອງ ແລະ ເນື້ອໃນຂອງ ເອກະສານຂາດວັກ ຂາດຕອນ. ຫນູມັກຈະເຈາະຕູ້ ຫລື ຫີບ ແລະ ເຂົ້າໄປກັດໜັງສືໃບລານ ,ເຮັດຮັງໃສ່ ເອກະສານກໍ່ຈະແຕກຜູກຊະຊາຍ, ຂາດມຸ່ນ ເປັນສິ້ນໆ ແລະ ໃຊ້ການບໍ່ໄດ້.

5. <u>ວັດຂາດພະສົງ</u>

ປະຈຸບັນ ມີວັດຮ້າງຫຼາຍວັດຢູ່ໃນທົ່ວປະເທດທີ່ຂາດພະສົງປະຕິບັດຮັກສາ. ວັດຖຸ ແລະສິ່ງຂອງມີຄ່າທີ່ມີຢູ່ໃນວັດ ກໍ່ຂາດຜູ້ຮັບຜິດຊອບ ແລະປົກປັກຮັກສາ ຈຶ່ງຖືກກຸ່ມຄົນບໍ່ດີລັກ ຫລື ທຳລາຍ. ບາງວັດຈະມີພະແຕ່ສະເພາະຍາມເຂົ້າພັນສາ ເມື່ອອອກພັນສາພະກໍ່ຈະຫນີໄປບ່ອນອື່ນ, ຊຶ່ງບາງຄັ້ງກໍ່ໄດ້ເອົາຫນັງສືໃບລານ ເລື່ອງສຳຄັນໆ ທີ່ມີຢູ່ໃນວັດຕິດມືໄປນຳ... ສຸດທ້າຍ ເອກະສານທີ່ມີຄ່າໃນວັດກໍ່ສູນຫາຍໄປ ຢ່າງໄຮ້ຮ່ອງຮອຍ. ຢູ່ບາງວັດເມື່ອຂາດຜູ້ດູແລຮັກສາຫນັງສືໃບລານກໍ່ເສຍຫາຍ ດ້ວຍສາເຫດຕ່າງໆ ເຊັ່ນ : ຫນູກັດ, ປອກເລຍ, ມອດເຈາະ, ຝົນຮົ່ວໃສ່, ຕົກໂນະ, ຝຸໂດກ ແລະອື່ນໆ. ຜ່ານມາຂ້າພະເຈົ້າໄດ້ເຫັນ ຫຼາຍວັດທີ່ເປັນສຳນັກສຶກສາສຳຄັນ ຂອງຝ່າຍສົງ ແຕ່ກ່ອນ, ເມື່ອກາຍເປັນວັດຮ້າງ ບໍ່ມີພະມາສືບທອດ ປະຕິບັດ ຮັກສາ ໃນປະຈຸບັນ ຫາຫນັງສືໃບລານ ຫຼົງເຫຼືອພໍເປັນ ຮ່ອງຮອຍແຫ່ງອະດີດ ກໍ່ບໍ່ມີພໍສົມເລີຍ.

ນອກຈາກສາເຫດຕ່າງໆ ທີ່ໄດ້ກ່າວມາ ຂ້າງເທິງນັ້ນແລ້ວ ກໍ່ຍັງຄົງມີສາເຫດອື່ນໆອີກເຊັ່ນວ່າ : ການຢືມຢືມ ລືມສົ່ງ, ການລັກລອບຊື້ຂາຍເປັນຕົ້ນ. ແຕ່ທັງໝົດກໍ່ພໍສັງເຂບໄດ້ວ່າ ສາເຫດທີ່ສຳຄັນ ແມ່ນການຂາດຄວາມ ເອົາໃຈໃສ່ດູແລຢ່າງຖືກຕ້ອງ ຕາມຫຼັກວິຊາການ ນັ້ນເອງ. ຜ່ານມາມີຫລາຍວັດ ທີ່ໄດ້ເອົາ ໃຈໃສ່ປົກປັກຮັກສາ ມໍລະດົກເກົ່າແກ່ເຫລົ່ານີ້ ໄດ້ເປັນຢ່າງດີ, ມີຕູ້ມີຫີບໃສ່, ຫຸ້ມຫໍ່ດ້ວຍຜ້າ ສະອາດຈົບງາມ, ມີການກວດກາ ແລະ ບັນທຶກຄັກແນ່. ແຕ່ຫນ້າເສຍດາຍ ທີ່ບາງບ່ອນ ຍັງປ່ອຍປະລະເລີຍ, ຂາດ ຜ້າຫໍ່, ບໍ່ມີໄມ້ປະກັບ, ບໍ່ມີຕູ້ໃສ່, ປະຖິ້ມຊະຊາຍ, ສັບປົນ ບໍ່ເປັນຜູກເປັນມັດ. ຮ້າຍແຮງຍິ່ງໄປກວ່ານັ້ນ ກໍ່ຍັງມີການຖື ເບົາຕໍ່ ເອກະສານ ທີ່ມີຄ່າ ໂດຍຖືວ່າ ເປັນຂອງຫຼາຫຼັງ ງົມງວາຍຕ່າງໆ ນາໆ...

ທັງໝົດນີ້ ຂ້າພະເຈົ້າ ເວົ້າຕາມສະພາບຄວາມເປັນຈິງ ຂອງໜັງສືໃບລານ ທີ່ໄດ້ພົບເຫັນດ້ວຍຕົນເອງ, ຜິດຖືກປະການໃດນັ້ນ ແລ້ວແຕ່ທ່ານນັກປາດອາຈານຜູ້ອາວຸໂສ ຈະພິຈາລະນາ ເອົາເທີ້ນ.

# ຕຳລາຢາ ແພນບູຮານ

ສະເຫນີໂດຍ : ລາວຄຳ

ບັນພະບຸລຸດ ແລະ ນັກປາດອາຈານ ຄົນບູຮານ ລາວ ແຕ່ສະໄໝກ່ອນ ໄດ້ບັນທຶກເອົາ ວິຊາຄວາມຮູ້ ດ້ານຕ່າງໆ ທາງທັມມະຊາດ ແລະ ສັງຄົມ ເຂົ້າສູ່ ນັບສະໝອງ ໂດຍຜ່ານ ຂະບວນ ວິວັດຈາກຫຼາຍໆ ຮຸ່ນຄົນ ຈາກຮຸ່ນຄົນນີ້ ຕໍ່ໃສ່ຮຸ່ນຄົນໃໝ່ ຢ່າງຕໍ່ເນື່ອງແລ້ວ ກາຍມາ ເປັນພູມປັນຍາ ອຸດົມສົມບູນ ຈົນມີຮອດ 18 ສາດ ໃນນີ້ ກໍ່ມີຕຳລາຢາບູຮານ ຊຶ່ງ ຄົນເຮົາ ຍັງໃຊ້ໄດ້ຮອດປະຈຸບັນ. ເພື່ອຄວາມຈົດຈຳ ແລະ ຖ່າຍທອດວິຊາຄວາມຮູ້ເຫຼົ່ານັ້ນ, ນັກປາດ ອາຈານ ໄດ້ບັນທຶກ ຫຼື ລິດຈະນາ ລົງໄວ້ໃນ ເອກະສານ ໃບລານ ຢູ່ຕາມວັດຕ່າງໆ ທີ່ພວກເຮົາເຄີຍພົບເຫັນ ຍ້ອນແນວນັ້ນເອງ ເອກະສານໃບລານລາວ (ຄຳພີ) ບໍ່ວ່າ ອັກສອນທັມ ຫລື ອັກສອນລາວເດີມ ຈຶ່ງອຸດົມສົມບູນ ໄປດ້ວຍສາດຕ່າງໆ ທີ່ພວກເຮົາຄວນຈະໄດ້ຄົ້ນຄວ້າ ແລະ ນຳອອກໃຊ້ໃນສັງຄົມປະຈຸບັນ. ສະນັ້ນ ຂ້າພະເຈົ້າ ຈຶ່ງຂໍນຳເອົາ ຕຳລາຢາ ແຜນບູຮານ ທີ່ໄດ້ສະສົມມາຈາກວັດຕ່າງໆ ສະເໜີທ່ານ ຜູ້ອ່ານ, ແຕ່ຕຳລາຢານີ້ ຈະໄດ້ຮັບຜົນ ຫລື ບໍ່ນັ້ນ ຜູ້ຂຽນເອງ ກໍ່ຍັງບໍ່ທັນໄດ້ທົດລອງ ພຽງແຕ່ຈະນຳສະເໜີ ທ່ານຜູ້ອ່ານດັ່ງນີ້ :

**ຕຳລາຢາຈາກລານກ້ອມວັດທ່າງ່ອນ (ເມືອງ ໄຊທານີ, ກຳແພງນະຄອນວຽງຈັນ )**

**- ຢາດີທັມມະລາ ( ເຈັບຄໍ )**

+ ໃຫ້ເອົາຄາງກະທ້າງ

+ ເຄືອຍໄກ່ປ່າ

+ ນົມຜາ

ຝົນທາດີແລ

**- ຢາດີປະດົງ 108 : ( ຕຳລາ 1 )**

+ ເປືອກມ່ວງບ້ານ

+ ເປືອກນີ້ໝັງ

+ ເປືອກສີກາລີງ

+ ເປືອກຝົນເດືອນຫ້າ

ຝົນກິນຝົນທາດີແລ

**( ຕຳລາ 2 )**

+ ຮາກກາຖົ່ວພູ

+ ຮາກບອງສະໝູດ

+ ຮາກເຂົ້າຈ້າວ

+ ຕາອ້ອຍດຳ

+ ນ້ຳງາ ເອົາທັງຫຼາຍ

ຝົນກິນດີແລ

**( ຕຳລາ 3 )**

+ ຮາກດຸກດານ

+ ຮາກຂີ້ການ້ອຍ

+ ຮາກຂີ້ກາຫຼວງ

+ ຂີ້ນາກ

+ ກົກໂພ

+ ເອົາຄວາຍຟ້າຜ່າ

ຝົນກິນຝົນທາ

**ຈາກລານກ້ອມວັດບ້ານໄຊ ( ເມືອງ ໄຊທານີ, ກຳແພງ ນະຄອນວຽງຈັນ )**

**- ຢາດີຂີ້ເຂື້ອນ**

+ ໃຫ້ເອົາໝາກຂີ້ກາ ໃຫ້ຄວັດໃນມັນອອກ, ແລ້ວກໍ່ເອົາແຕ່ ນອນຂອງມັນມາເຜົາໄຟ ແລ້ວປົນໃສ່

ນ້ຳມັນງາ ຈຶ່ງທາດີແລ

**- ຢາຊາງອີຕາ ( ມີອີຕາຫລາຍ )**

+ ໃຫ້ເອົາເຄືອຜີພ່ວນ

+ ແກ່ນສົ້ມກົບ

+ ແຕງແຊງ

+ ແກ່ນໄມ້ອີໝູ

+ ຮາກຕ້າງຕີບ

ຝົນກິນຫາຍແລ

**ຈາກລານຍາວ ວັດໂພນກອກ ບ້ານປາກກະຍູງ ( ເມືອງ ທຸລະຄົມ, ແຂວງ ວຽງຈັນ )**

**- ຢາຕີປອດເສັ້ນເອັນ - ປວດແອວ**

+ ຜັກອີ່ເລີດ ທັງຮາກທັງໃບທັງລຳໃຫ້ເອົາໄປຕາກແຫ້ງແລ້ວ ບົດໃຫ້ມຸ່ນ

+ ອີ່ຫມື້ນອື້ນ ຈຶ່ງເອົາໄປຊຸ່ງນ້ຳໝັກໃຫ້ເທົ່າກັນ,

+ໄຟເດືອນຫ້າ ເອົາທັງຮາກທັງໃບທັງລຳ ແລ້ວກໍ່ ຄົບເຂົ້າກັບໃຫ້ທົ່ວເຖິງ ຈຶ່ງປັ້ນ

+ຜັກຕຳນິນ ເອົາທັງຮາກທັງໃບ ແລະ ເຄືອ ເປັນລູກກອນນ້ອຍໆ ປະມານທໍ່ປາຍ

+ ຢາຫົວ ມື້ວມື ຈາກນັ້ນ ຈຶ່ງກິນໃນ 2 ຄາບ

+ ເຄືອເອົາຣ໌ ເຊົ້າ-ແລງ, ຄັ້ງລະ 2 ເມັດ

+ ນ້ຳເຜີ້ງ ຈະໄດ້ຮັບຜົນທີ່ສຸດ ມີຜູ້ທົດລອງ ມາແລ້ວ:ເພາະເຫດ : ນ້ຳເຜີ້ງບໍ່ໃຫ້ ໃສ່ຫລາຍ, ຖ້າໃສ່ຫຼາຍ ຈະປັ້ນເປັນລູກກອນບໍ່ໄດ້ ເພາະມັນຈະແຫຼວໂພດ.

**- ຢາຕີຫູຫນວກ - ຫູອື້ງ**

+ ໃຫ້ເອົາຫມາກຫອຍໂປ້ : ຕ່ອຍກົ້ນອອກແລ້ວ ເອົາຜົມມະເສນຍັດໃສ່ ພໍເປື່ອຍແລ້ວ ຍັດໃສ່ຫູ, ໃຫ້ໃສ່ເບິ່ງ 4 ເທື່ອ.

**- ຢາແກ້ເບື່ອຂອງກິນ**

+ ເຫັດຂາມ

+ ເຫັດແດງ

+ ເຫັດຜີມານ

+ ແກ່ນສັກ

ຝົນກິນດີແລ

**- ຢາຕີໂລກລໍຕີບ**

+ ຜັກຫນອກ

+ ໝາກແລ້ງອົມ

ຍ່ອງໃສ່ນ້ຳກິນດີແລ

**- ຢາຕີປ່ວຍຍືນ**

**( ຫາຍໃຈຫອດຫົວ - ນອນບໍ່ຫລັບ )**

+ ເອົາກົກເດື່ອກ້ຽງ

+ ເດື່ອປ່ອງ

+ ຄອມຕົ້ນ

ຕົ້ມກິນດີແລ

**- ຢາແກ້ໂລກຫົວໃຈ**

+ ຮາກຜັກຫົມແດງ

+ ຮາກຫຍ້າໂຄຍງູ

+ ຮາກແກ

+ ຫົວຫຍ້າແຫ້ວໝູ

+ ຮາກເຄືອຊາຍສົງ

ໃຫ້ຕົ້ມກິນດີແລ

**- ຢາຕີເຈັບແອວ**

**ເຈັບໝາກໄຂ່ຫຼັງ ໝ່ວງໃສ່ຕໍ່**

+ ກົກຝາງແດງ

+ ເຄືອຫັບແດງ

+ ກົກໝາກເຟືອງ

+ ຫົວໝາກບັດ

ໃຫ້ຕົ້ມກິນດີແລ

**- ຢາແກ້ເຈັບແອວຊື່ວຄາວ**

+ ເອົາປູດແຜງ

+ ຂອັ້ນຫມາກອື

ຕົ້ມກິນດີແລ

# ສະຖິຕິຈຳນວນວັດ ແລະ ໜັງສືໃບລານ ທີ່ສຳຫຼວດແລ້ວ

## ກຳແພງນະຄອນ ແລະ ແຂວງວຽງຈັນ ໂຄງການປີທີ I

| ລ/ດ | ແຂວງ/ເມືອງ/ວັດ | ບ້ານ | ຈຳນວນ ຜູກ | ຈຳນວນ ໃບສຳຫຼວດ | ຈຳນວນ ເລື່ອງ | ຈຳນວນ ມັດ | ຖ່າຍໄມໂຄ ຟີມ |
|---|---|---|---|---|---|---|---|
| | * ກຳແພງນະຄອນ | | | | | | |
| | * ເມືອງໄຊທານີ | | | | | | |
| 1 | - ວັດປະຊານິຍົມວາລະວາດ | ນາກຸງ | 895 | 143 | 73 | 56 | 147 ຜູກ |
| 2 | - ວັດສີເທບທັມຄຸນ | ຫາດກ້ຽງ | 618 | 110 | 74 | 30 | 38 ຜູກ |
| 3 | - ວັດວິສຸດທາຣາມ | ທົ່ງມັ່ງ | 495 | 89 | 60 | 36 | 60 ຜູກ |
| 4 | - ວັດສີບຸນເຮືອງ | ທ່າງ່ອນ | 356 | 87 | 62 | 27 | 44 ຜູກ |
| 5 | - ວັດໂພໄຊ | ທົ່ວຊຽງໃຕ້ | 585 | 106 | 77 | 39 | 58 ຜູກ |
| 6 | - ວັດໂພສີສົມພອນ | ທົ່ວຊຽງເໜືອ | 619 | 109 | 77 | 40 | 41 ຜູກ |
| 7 | - ວັດແສນຊຸມ | ໃຜ່ລ້ອມ | 618 | 89 | 57 | 33 | 46 ຜູກ |
| 8 | - ວັດສີຊົມຊື່ນ | ສ້າງທົ່ວບໍ່ | 239 | 72 | 52 | 23 | 58 ຜູກ |
| 9 | - ວັດຣັດຕະນະວະໄລ | ພ້າວເໜືອ | 683 | 180 | 99 | 49 | 199 ຜູກ |
| 10 | - ວັດສີສະຫວ່າງໂພນສູງ | ພ້າວໃຕ້ | 850 | 206 | 116 | 50 | 171 ຜູກ |
| 11 | - ວັດປະຖົມມະໂພສີ | ນາຊອນໃຕ້ | 1.989 | 380 | 197 | 226 | 602 ຜູກ |
| 12 | - ວັດບ້ານໄຊ | ບ້ານໄຊ | 1.277 | 240 | 118 | 104 | 109 ຜູກ |
| | * ເມືອງ ນາຊາຍທອງ | | | | | | |
| 13 | - ວັດນາຂ່າ | ນາຂ່າ | 432 | 90 | 87 | 33 | 33 ຜູກ |
| 14 | - ວັດພຸດທະບາດໂພນຄ້ອງ | ນາຂ່າ | 537 | 136 | 95 | 56 | 185 ຜູກ |
| 15 | - ວັດອຳພາວັນ | ໂພນມ່ວງ | 239 | 38 | 32 | 12 | 43 ຜູກ |
| 16 | - ວັດສີຣິໂຄດົມ | ຮ່ອງງິ້ວ | 213 | 54 | 24 | 21 | 8 ຜູກໃຫຍ່ |
| 17 | - ວັດໂພໄຊຍະຣາມ | ນາຊົ່ບ | 470 | 112 | 70 | 37 | 68 ຜູກ |
| 18 | - ວັດອີໄລ | ອີໄລໃຕ້ | 548 | 143 | 89 | 54 | 109 ຜູກ |

| | | | | | | | |
|---|---|---|---|---|---|---|---|
| | * ເມືອງ ສີສັດຕະນາກ | | | | | | |
| 19 | - ວັດທ່າຍໂສກ | ທ່າຍໂສກ | 218 | 46 | 37 | 22 | 41 ຜູກ |
| 20 | - ວັດຄົກນິນ | ຄົກນິນ | 342 | 84 | 63 | 28 | 48 ຜູກ |
| 21 | - ວັດຈອມທອງວັນນະຣາມ | ຈອມທອງ | 179 | 29 | 30 | 15 | |
| | * ເມືອງຫາດຊາຍຟອງ | | | | | | |
| 22 | - ວັດສີລຸຊຸງຄຸງ | ນາກຸງ | 756 | 181 | 147 | 94 | 84 ຜູກ |
| 23 | - ວັດແສງພະຈັນ | ໜນາກນາວໃຕ້ | 1.717 | 464 | 193 | 197 | 131 ຜູກ |
| 24 | - ວັດສີບຸນເຮືອງ | ດົງກະລືມ | 1.085 | 325 | 127 | 142 | 87 ຜູກ |
| 25 | - ວັດສີຊືມຊື່ນ | ໂດນເໜືອ | 394 | 134 | 123 | 56 | 16 ຜູກ |
| 26 | - ວັດສີສະຫວາດ | ສາລາຄຳ | 375 | 86 | 64 | 30 | 95 ຜູກ |
| 27 | - ວັດປ່າຊຳປາກແຮດ | ສາລາຄຳ | 53 | 19 | 19 | 4 | - |
| 28 | - ວັດໂພນເລົາ | ສາລາຄຳ | 31 | 12 | 11 | 3 | - |
| | ລວມ | | 16.813 | 3.754 | 2.273 | 1.517 | 2.521 ຜູກ |
| | * ແຂວງວຽງຈັນ<br>* ເມືອງໂພນໂຮງ | | | | | | |
| 29 | - ວັດສີບຸນເຮືອງ | ໂພນໝີໃຕ້ | 443 | 155 | 62 | 52 | 93 ຜູກ |
| 30 | - ວັດອຸດົມຄະດີ | ໂພນຊອງ | 739 | 259 | 53 | 73 | 100 ຜູກ |
| 31 | - ວັດທົ່ງນາໂພ | ນາໂພ | 971 | 200 | 83 | 79 | 344 ຜູກ |
| 32 | - ວັດນາທອງ | ນາທອງ | 227 | 82 | 50 | 16 | 49 ຜູກ |
| 33 | - ວັດສີນປະເສີດ | ໂພນສີດາ | 390 | 140 | 102 | 38 | 71 ຜູກ |
| 34 | - ວັດສຸວັນນະຄີລີ | ໂພນໂຮງ | 804 | 252 | 71 | 61 | 83 ຜູກ |
| 35 | - ວັດສະກ້າ | ສະກ້າ | 766 | 177 | 106 | 62 | 228 ຜູກ |
| | * ເມືອງ ແກ້ວອຸດົມ | | | | | | |
| 36 | - ວັດ ນາປູນ | ນາປູນ | 291 | 108 | 71 | 25 | 4 ຜູກ |

| | | | | | | | |
|---|---|---|---|---|---|---|---|
| | * ເມືອງວັງວຽງ | | | | | | |
| 37 | - ວັດ ມະຫາທາດ | | 38 | 12 | 11 | | 5 ຜູກ |
| 38 | - ວັດ ກາງ | | 50 | 14 | 9 | | 4 ຜູກ |
| 39 | - ວັດ ໂພນສະອາດ | | 23 | 9 | 9 | | 4 ຜູກ |
| 40 | - ວັດ ໂພນເພັ້ງ | | 46 | 31 | 26 | | |
| 41 | - ວັດ ວຽງແກ້ວ | | 56 | 21 | 19 | | |
| 42 | - ວັດ ເມືອງຊອງ | | 46 | 11 | 11 | | 12 ຜູກ |
| 43 | - ວັດ ຜາຕັ້ງ | | 522 | 145 | 70 | 32 | 21 ຜູກ |
| | * ເມືອງ ເຟືອງ | | | | | | |
| 44 | - ວັດ ຫີນເຫີບໃຕ້ | | 113 | 32 | 29 | 11 | 7 ຜູກ |
| 45 | - ວັດ ຫີນເຫີບເຫນືອ | | 6 | 6 | 6 | | 5 ຜູກ |
| | * ເມືອງທຸລະຄົມ | | | | | | |
| 46 | - ວັດ ໂພນກອກ | ປາກກະຍູງເຫນືອ | 1.262 | 276 | 129 | 84 | 231 ຜູກ |
| 47 | - ວັດ ໃຕ້ປິຍາຣາມ | ປາກກະຍູງໃຕ້ | 700 | 116 | 80 | 45 | 24 ຜູກ |
| 48 | - ວັດ ສີບຸນເຮືອງ | ປາກກະຍູງກາງ | 710 | 150 | 112 | 51 | 104 ຜູກ |
| 49 | - ວັດ ນ້ຳພະນາຍ | ບ້ານເກີນ | 1.128 | 244 | 133 | 83 | 107 ຜູກ |
| 50 | - ວັດ ຫມື່ນຫມັ້ນ | ບ້ານເກີນ | 663 | 129 | 84 | 52 | 43 ຜູກ |
| 51 | - ວັດ ຫມື່ນເພັ້ງ | ບ້ານເກີນ | 378 | 104 | 80 | 39 | 114 ຜູກ |
| 52 | - ວັດ ບຸ່ງຜ້າວເຫນືອ | ບຸ່ງຜ້າວ | 466 | 99 | 74 | 37 | 27 ຜູກ |
| 53 | - ວັດ ບຸ່ງຜ້າວໃຕ້ | ບຸ່ງຜ້າວ | 138 | 34 | 26 | 12 | |
| 54 | - ວັດ ປ່າໄຜ່ໄຊຍະຣາມ | ທົ່ວທາດໄຊ | 337 | 66 | 48 | 29 | 16 ຜູກ |
| 55 | - ວັດ ພູພຣະເນົາ | ນາບໍ່ | 334 | 102 | | 34 | 83 ຜູກ |
| 56 | - ວັດ ນາແພງ | ນາແພງ | 1.041 | 258 | 114 | 70 | 48 ຜູກ |
| 57 | - ວັດ ຕານປ່ຽວ | ຕານປ່ຽວ | 1.418 | 239 | 122 | 89 | 221 ຜູກ |
| 58 | - ວັດ ລິ້ງຊັນ | ລິ້ງຊັນ | 1.155 | 264 | 186 | 84 | 292 ຜູກ |
| | ລວມ | | 15.261 | 3.735 | 1.976 | 1.158 | 2.340 ຜູກ |

<u>ຫມາຍເຫດ</u> : - ຈຳນວນວັດ ລວມທັງຫມົດ ມີ : 58 ວັດ

- ຈຳນວນຫນັງສືໃບລານ ລວມທັງຫມົດ 2 ແຂວງ ມີ : 32.074 ຜູກ

ບົດກອນ

# ວັດ ກັບ ບ້ານ

\+ ວັດ ແລະ ບ້ານ
ເກີດກົ່ມງຄຸນດີ
ມີພະສົງອົງເຈົ້າ
ວັດເປັນບ່ອນຮຽນຮ່ຳຮູ້

ປະສານຊ່ວຍສືສັນ ກັນດາຍ
ຫາກວັດມີໃນບ້ານ
ສານະເນບນັກປາດ
ວິຊາຊັ້ນສາທະສິນ

\+ ຊາວບ້ານເປັນຜູ້ຄ້ຳ
ມີບຸນສິນກິນທານ
ສົມທົບກັນທັງເຖົ້າ
ແທນແຕ່ໂຮມຮ່ອມເຕົ້າ

ຈັງທັບຄາບຄາວຫວານ
ຊ່ວຍຊູແຊວຊວ້ານ
ຄູບາພ້ອມພໍ່ແມ່
ປະສົງສ້າງຊ່ວຍສົນ

\+ ວັດຊີງານສະອາດເອ້
ເພາະພະທົງທານສິນ
ນຳໄຕ່ຄອງວິໄນເຄົ້າ
ສອນສັ່ງ ຟູງຊ່ຳເຊື້ອ

ເປັນບ່ອນສັກສິດ
ຮີດພະທັມແຂງເຂັ້ມ
ໂຄດົມພະເຈົ້າກ່າວ
ຊາວບ້ານໄດ້ຢູ່ເຢັນ

\+ ບ້ານຄ້ຳວັດ-ວັດຄ້ຳບ້ານ
ພະພໍ່າພຣຸນພາວັນນາ
ວັດເປັນດັ່ງໂພໄຊຕົ້ນ
ເປັນສາລາແວ່ຢັ້ງ

ຈິ່ງຍືນຍົ່ງຍູສະຖອນ
ຍາດໂຍມໄສເຫລື້ອມ
ສັກກູນາອາໄສເພິ່ງ
ສັດທາໄດ້ເພິ່ງບຸນ ຊອບແລ້ວ

*ທອງໃບ ໂພທິສານ*

ເຈົ້າຂອງ
[illegible]
ສຳນັກງານ
[illegible]
[illegible]
[illegible]

ຄະນະຈັດທຳ
[illegible]
[illegible]
[illegible]
[illegible]